ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ມັງກອນ 2025
ປີທີ 14
ສະບັບທີ 1002
ລາຍສັປະດາ

## ປະທານສະພາແຫ່ງຊາດ ພົບປະນາຍົກລັດຖະມົນຕີຫວຽດນາມ



(ສພຊ) - ຕອນບ່າຍວັນສຸກທີ 10 ມັງກອນນີ້ ທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ພົບປະກັບສະຫາຍ ຟ້າມ ມິ່ງ ຈິງ ກຳມະການກົມການເມືອງສູນກາງພັກ ກອມມູນິດຫວຽດນາມ, ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ ສສ.ຫວຽດນາມ ໃນໂອກາດມາຢ້ຽມຢາມ ແລະເຂົ້າຮ່ວມກອງປະຊຸມຄັ້ງທີ 47 ຂອງຄະນະກຳມະການຮ່ວມມືທະວິພາຄີລະຫວ່າງສອງລັດຖະບານລາວ-ຫວຽດນາມທີ່ຈັດຂຶ້ນໃນວັນທີ 9 ມັງກອນຜ່ານມາ.

ສະຫາຍ ຟ້າມ ມິ່ງ ຈິງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການພົວພັນຮ່ວມມືລະຫວ່າງສອງປະເທດໃນໄລຍະຜ່ານມາ ທັງໄດ້ແລກປ່ຽນບາງສະພາບການທີ່ພົ້ນເດັ່ນຢູ່ພາກພື້ນ ແລະ

ອ່ານຕໍ່ໜ້າ 9




## ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ

(ສພຊ) - ວັນທີ 16 ມັງກອນນີ້ທີ່ໂຮງແຮມຄຣາວພລາຊາ ວຽງຈັນ ໄດ້ມີກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ໂດຍການເປັນປະທານຂອງທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຮອງປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ); ມີບັນດາທ່ານໃນຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ, ການນຳຂັ້ນສູງຈາກທຸກກະຊວງ, ອົງການອ້ອມຂ້າງສູນກາງ, ພະນັກງານບຳນານ, ມະຫາວິທະຍາໄລ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເຂົ້າຮ່ວມ.




ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ຢູ່ບັນດາກະຊວງ ແລະ ອົງການອ້ອມຂ້າງສູນກາງ ຄັ້ງນີ້ ເປັນໜຶ່ງໃນ 3 ຈຸດທີ່ໄດ້ດຳເນີນກອງປະຊຸມພ້ອມກັນໃນເວລາດຽວກັນ ຄື: 1) ບັນດາກະຊວງ ແລະ ອົງການອ້ອມຂ້າງສູນກາງ; 2) ແຂວງຊຽງຂວາງ, ແຂວງຫົວພັນ ແລະແຂວງໄຊສົມບູນ;3)ແຂວງສະຫວັນນະເຂດ,ແຂວງຄຳມ່ວນ ແລະ ແຂວງຈຳປາສັກ. ຈຸດປະສົງຕົ້ນຕໍຂອງກອງປະຊຸມຄັ້ງນີ້ແມ່ນເພື່ອປະກອບຄຳເຫັນເຂົ້າໃສ່ເນື້ອໃນຮ່າງລັດຖະທຳມະນູນ

ອ່ານຕໍ່ໜ້າ 10

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນປະຈຳເດືອນມັງກອນ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດສະໄໝວິສາມັນປະຈຳເດືອນມັງກອນ 2025 ໄດ້ດຳເນີນໃນວັນທີ 8 ມັງກອນນີ້ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ,

ອ່ານຕໍ່ໜ້າ 10

## ຮອງປະທານສະພາແຫ່ງຊາດ ພົບປະຜູ້ມີສິດເລືອກຕັ້ງທີ່ແຂວງສະຫວັນນະເຂດ



(ສພຊ) - ວັນທີ 6-7 ມັງກອນຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງອາດສະພັງທອງ ແລະ ເມືອງທ່າປາງທອງ ໄດ້ລົງເຄື່ອນໄຫວຢ້ຽມຢາມ, ພົບປະຜູ້ມີສິດເລືອກຕັ້ງຢູ່4 ຈຸດຄື: ບ້ານປ່າໄລ, ອົງການປົກຄອງເມືອງອາດສະພັງທອງ, ບ້ານນາຫົວຄວາຍແລະ ອົງການປົກຄອງເມືອງທ່າປາງທອງ ໂດຍໄດ້ຮັບການຕ້ອນຮັບຈາກຄະນະພັກເມືອງ, ຄະນະພັກຮາກຖານກຸ່ມບ້ານ, ອົງການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນ ຈຳນວນຫຼາຍສົມຄວນ.

ໃນການພົບປະຢູ່ 4 ຈຸດດັ່ງກ່າວ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຮັບຟັງການລາຍງານກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງເມືອງ

ອ່ານຕໍ່ໜ້າ 9

## ຈະທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ຢູ່ 7 ຈຸດທົ່ວປະເທດ ໃຫ້ສຳເລັດໃນເດືອນນີ້

(ສພຊ) - ຕອນບ່າຍວັນທີ 15 ມັງກອນນີ້ ທີ່ສະພາແຫ່ງຊາດ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການ ແລະ ຫົວໜ້າກອງເລຂາຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການຈັດຕັ້ງທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ໃນທົ່ວປະເທດ ເຊິ່ງທ່ານໄດ້ກ່າວວ່າ: ການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງຄັ້ງນີ້ ມີຄວາມໝາຍສຳຄັນຢ່າງຍິ່ງແລະແມ່ນຄວາມຈຳເປັນຢ່າງພາວະວິໄສ, ເພາະວ່າລັດຖະທຳມະນູນ ແມ່ນນິຕິກຳສູງສຸດຂອງລັດ ແຫ່ງ ສປປລາວ ແລະ ເປັນກົດໝາຍພື້ນຖານຂອງຊາດລາວເຮົາ. ຜ່ານການກະກຽມຢ່າງເຄັ່ງຮ້ອນ ເປັນເວລາ 6 ເດືອນເຕັມ ນັບແຕ່ເດືອນມິຖຸນາ 2024 ເປັນຕົ້ນມາ, ຮ່າງລັດຖະທຳມະ



ອ່ານຕໍ່ໜ້າ 8



ຊຸດບໍ່ຖືກບໍ່ ຫູ່ບໍ່ຖືກເບົ້າ (ໜ້າ 9)



ສິງກະໂປ... (ໜ້າ 11)




ວິທີການຕ່າງໆ... (ໜ້າ 12)

ຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ (20 ມັງກອນ 1949 - 20 ມັງກອນ 2025) ຢ່າງສຸດໃຈ!

# ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ຢູ່ຂັ້ນທ້ອງຖິ່ນ




(ສພຊ) - ວັນທີ 17 ມັງກອນຜ່ານມາ, ທີ່ໂຮງແຮມຣໍລິເດອິນ, ໄດ້ມີກອງປະຊຸມທາບທາມຮ່າງລັດຖະທຳມະນູນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຮອງປະທານ ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ); ເຂົ້າຮ່ວມມີບັນດາທ່ານໃນຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ, ການນຳຈາກອົງການຈັດຕັ້ງພັກ-ລັດ, ບັນດາພະແນກການ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກຳ, ແລະ ພາກສ່ວນທີ່ກ່ຽວຂ້ອງຈາກນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ.

ຈຸດປະສົງແມ່ນເພື່ອເຮັດໃຫ້ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງຂອງພັກ ສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ເປັນການເຊື່ອມຊຶມ ແລະ ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ ກ່ຽວກັບຮ່າງລັດຖະທຳມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມໃຫ້ດີຂຶ້ນກວ່າເກົ່າ; ທັງເປັນການປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດໃນປີນີ້.

ໃນກອງປະຊຸມ, ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນ ຈາກທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ, ຄະນະກຳມະການລະດັບຊາດປັບ ປຸງລັດຖະທຳມະນູນ ທັງເປັນຫົວໜ້າອະນຸກຳມະການບໍລິຫານ, ພິທີການ ແລະ ການເງິນ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຢ່າງມີຈຸດສຸມ ແລະ ເປັນປະໂຫຍດ ເພື່ອໃຫ້ ຄລຊ ນຳຄຳເຫັນໄປຄົ້ນຄວ້າ ແລະ ປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນ.

**(ສອນສັກ ວັນວິໄຊ)**

# ກຳມະບານຮາກຖານ ກຕທ ສຳເລັດກອງປະຊຸມໃຫຍ່ ຄັ້ງທີ II



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານກຳມາທິການການຕ່າງປະເທດ (ກຕທ) ໄດ້ຈັດຂຶ້ນເມື່ອວັນຈັນທີ 13 ມັງກອນຜ່ານມາ ໂດຍການເປັນປະທານຂອງສະຫາຍ ນາງ ນິດແກ້ວ ຄຳມີ ປະທານກຳມະບານຮາກຖານກຳມາທິການການຕ່າງປະເທດ; ມີສະຫາຍ ສັນຍາ ປຣະເສີດ ຄະນະພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ, ສະຫາຍອຳໄພ ຈິດມານົບ ຄະນະພັກ, ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດແລະແຂກຖືກເຊີນ ເຂົ້າຮ່ວມທັງໝົດ 35 ສະຫາຍ ເປັນຍິງ 18 ສະຫາຍ.

ກອງປະຊຸມໄດ້ເຫັນດີເປັນເອກະພາບຮັບຮອງເອົາບົດລາຍງານການເມືອງ ແລະ ທິດທາງແຜນການ 5 ປີ ນັບແຕ່ປີ 2025-2029 ແລະ ມາດຕະການໃນການຈັດຕັ້ງປະຕິບັດ; ບົດສຳຫຼວດການນຳພາລວມຂອງກຳມະບານຮາກຖານ ກຕທ ຊຸດເກົ່າ ເຊິ່ງໃນນັ້ນ ໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ແລະ ບາງບົດຮຽນທີ່ຖອດຖອນໄດ້ຈາກການຊີ້ນຳ-ນຳພາແລະການຈັດຕັ້ງປະຕິບັດວຽກງານໃນໄລຍະ 5 ປີຜ່ານມາ. ພ້ອມນັ້ນ, ຍັງຮັບຮອງເອົາຜົນການປ່ອນບັດເລືອກຕັ້ງຄະນະກຳມະບານຮາກຖານ ກຕທ ຊຸດໃໝ່ ຄື: ສະຫາຍ ປອ. ພຸດສະດີ ປັນຍາສິດ ເປັນປະທານ, ສະຫາຍ ຮສຈ. ປອ. ລຳພົງ ວໍລະດີ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ສຸດສາຄອນ ອານັນທະ ເປັນຮອງປະທານ, ສະຫາຍ ນາງ ອານີເພັດ ແກ້ວລາ ແລະ ສະຫາຍ ນາງ ແສງດາວ ຊົງດາວເພັດ ເປັນກຳມະການ.

ສະຫາຍ ສັນຍາ ປຣະເສີດ ໄດ້ມີຄຳເຫັນເນັ້ນໜັກໃຫ້ສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງສະຫະພັນກຳມະບານສະພາແຫ່ງຊາດ ກໍຄືຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານກຳມາທິການການຕ່າງປະເທດ ໃຫ້ມີປະສິດທິພາບ, ປະສິດທິຜົນ; ເອົາໃຈໃສ່ສຶກສາອົບຮົມສະມາຊິກໃນໜ່ວຍ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກທາງດ້ານເສດຖະກິດ; ປະສານສົມທົບກັບຄະນະໜ່ວຍພັກຮາກຖານ, ຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ໃນການກໍ່ສ້າງ, ບຳລຸງສະມາຊິກກຳມະບານທີ່ຢູ່ໃນຄວາມຮັບຜິດຊອບ ໃຫ້ເປັນພະນັກງານ-ນຳພາຄຸ້ມຄອງ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນິຊຳນານທາງດ້ານວິຊາເພາະແລະດ້ານອື່ນໆ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງແຕ່ລະໄລຍະ; ເພີ່ມທະວີການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງສະມາຊິກກຳມະບານພາຍໃນໜ່ວຍ ໃຫ້ມີການເຄື່ອນໄຫວຢ່າງປົກກະຕິ ແລະ ມີປະສິດທິຜົນສູງ; ສູ້ຊົນຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງສະຫະພັນກຳມະບານລາວ ໂດຍຕິດພັນກັບຂະບວນຮັກຊາດ ແລະ ພັດທະນາ ໃຫ້ມີຄວາມຫ້າວຫັນເປັນຂະບວນຟົດຟື້ນ ແລະ ຕໍ່ເນື່ອງ.

**(ນາງ ອາລິນ ສຸພົມມະປະດິດ)**

# ກອງປະຊຸມປະຈຳປີ 2024ຂອງ ສນສ

(ສພຊ) - ວັນທີ 8 ມັງກອນນີ້ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສະຫຼຸບວຽກງານເຄື່ອນໄຫວປະຈຳປີ 2024 ແລະ ວາງທິດທາງແຜນການປີ 2025 ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ພາຍໃຕ້ການເປັນທານຂອງທ່ານສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ ຮອງປະທານສະພາແຫ່ງຊາດ; ມີຕາງໜ້າຄະນະນຳກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດພ້ອມດ້ວຍຄະນະກົມ, ສູນ, ຫ້ອງການ ພາຍໃນ ສພຊ ເຂົ້າຮ່ວມແບບເຊິ່ງໜ້າ, ມີຄະນະເລຂາທິ ການສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ເຂົ້າຮ່ວມທາງລະບົບອອນລາຍ.




ກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ວາງທິດທາງແຜນການປີ 2025 ຂອງສະຖາບັນຄົ້ນຄວ້ານິຕິກຳ ແລະ ເຜີຍແຜ່ແຜນດຳເນີນງານການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການໄລຍະທ້າຍສະໄໝຂອງ ສພຊ ຊຸດທີ IX ແລະ ຄາດຄະເນແຜນການຍົກສູງຂີດຄວາມສາມາດຮອດ 6 ເດືອນຕົ້ນປີ 2026; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ, ປະກອບຄຳຄວາມເຫັນຢ່າງສ້າງສັນ ແລະ ກົງໄປກົງມາ ເພື່ອເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

ສຈ. ປອ. ຈະເລີນ ເຍຍປາວເຣີ ໄດ້ມີຄຳເຫັນເນັ້ນໜັກຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳ ໂດຍໃຫ້ເອົາໃຈໃສ່ຄົ້ນຄວ້າກຳແໜ້ນແນວທາງຂອງພັກ, ຖືເອົາວຽກງານການເມືອງແນວຄິດເປັນກົກ ແລະ ສອດທ້ອຍເຂົ້າໃນທຸກຂົງເຂດວຽກງານ ເພື່ອສືບຕໍ່ສຶກສາອົບຮົມພະນັກງານໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ເປັນແບບຢ່າງໃນການນຳພາທີ່ມີລັກສະນະນຳໜ້າຂອງພັກ; ສືບຕໍ່ປັບປຸງການຈັດຕັ້ງແລະພະນັກງານໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ໂດຍສະເພາະພະນັກງານຄົ້ນຄວ້ານິຕິກຳ ໃຫ້ໄດ້ທາງດ້ານປະລິມານແລະຄຸນນະພາບ ໃຫ້ກາຍເປັນມືອາຊີບແລະຄວາມເປັນຊ່ຽວຊານໃນອະນາຄົດ; ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ ໂດຍສະເພາະແມ່ນການປະສານສົມທົບສະຖາບັນຕ່າງໆ ໃຫ້ກາຍເປັນຄູ່ຮ່ວມນຳກັນ ທັງປະສານສົມທົບກັບບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດເພື່ອປັບປຸງຮູບການ ແລະວິທີການໃນການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ກົມກຽວກັນ; ເພີ່ມທະວີຄວາມດຸໝັ້ນ, ຂະຫຍັນພຽນ ໃນການສຶກສາຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດຂອງຕົນໃຫ້ສູງຂຶ້ນເລື້ອຍໆ, ສຸມສະຕິປັນຍາເຂົ້າໃສ່ວຽກງານຄົ້ນຄວ້າວິທະຍາສາດໃຫ້ເລິກເຊິ່ງ ແລະ ມີຈຸດສຸມ ເພື່ອສະໜອງການຄົ້ນຄວ້າໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ເປັນຂໍ້ມູນໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດໃນແຕ່ລະໄລຍະ; ເອົາໃຈໃສ່ຄົ້ນຄວ້າຮູບການ, ວິທີການເຝິກອົບຮົມ, ຄົ້ນຄວ້າບັນດາຫົວຂໍ້ທັກສະທີ່ມີຄວາມສຳຄັນ, ການຄົ້ນຄວ້າບັນດາບົດສອນ, ປຶ້ມຄູ່ມືທີ່ເປັນບົດຮຽນທີ່ຈຳເປັນສຳລັບການປະຕິບັດພາລະບົດບາດ, ໜ້າທີ່ການເມືອງຂອງ ສຊຊ, ສສຂ ສາມາດນຳໃຊ້ເຂົ້າໃນວຽກງານໄດ້ຢ່າງແທ້ຈິງ; ຍົກສູງການຄົ້ນຄວ້າ, ວິ ເຄາະວິໄຈຂໍ້ມູນ, ຮູ້ໝູນໃຊ້ຜົນສຳເລັດດ້ານເຕັກໂນໂລຊີຂໍ້ມູນຂ່າວສານໃນຍຸກແຫ່ງການເຊື່ອມໂຍງ ແນໃສ່ການສະໜອງຂໍ້ມູນຂ່າວສານວຽກງານສະພາແຫ່ງຊາດຢ່າງກວ້າງຂວາງ, ຮັບປະກັນຄວາມຖືກຕ້ອງ, ຊັດເຈນແລະທັນການ; ພົວພັນກັບອົງການຈັດຕັ້ງ ແລະ ສະຖາບັນຄົ້ນຄວ້າທີ່ກ່ຽວຂ້ອງຂອງຕ່າງປະເທດ, ພາກພື້ນແລະສາກົນ ເພື່ອຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການ ມາພັດທະນາວຽກງານຂອງຕົນໃຫ້ເຕີບໃຫຍ່ຂະຫຍາຍຕົວ, ປະກອບສ່ວນຢ່າງຕັ້ງໜ້າໃນການປັບປຸງວຽກ ງານຂອງສະພາແຫ່ງຊາດດີຂຶ້ນຢ່າງບໍ່ຢຸດຢັ້ງ.

**(ນາງ ອາລິນ ສຸພົມມະປະດິດ)**



# ກສຕສ ຕິດຕາມກວດກາການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ເກືອໂປຕາສ



(ສພຊ)-ວັນທີ 14-15 ມັງກອນ 2025 ທ່ານ ນາງ ປິ່ງຄຳ ລາຊະສິມມາກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ(ກສຕສ) ພ້ອມດ້ວຍຄະນະ ປະກອບມີບັນດາທ່ານຮອງປະທານກຳມາທິການພາຍໃນ ສພຊ, ຜູ້ຕາງໜ້າຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານແລະບໍ່ແຮ່, ກະຊວງໂຍທາທິການແລະຂົນສົ່ງ, ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ), ອົງການປົກຄອງນະຄອນຫຼວງວຽງຈັນ, ອຳນາດການປົກຄອງເມືອງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງ ໄດ້ເຄື່ອນໄຫວເຮັດວຽກຢູ່ເມືອງປາກງື່ມ ແລະ ເມືອງໄຊທານີ ເພື່ອຕິດຕາມກວດກາ ແລະ ເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານແຮ່ທາດ ເປັນຕົ້ນ: ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ2030ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ2023, ມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສປນວ ຊຸດທີ II ສະບັບເລກທີ 026/ສປນວ, ລົງວັນທີ 11 ທັນວາ 2023, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ.

ຕອນເຊົ້າວັນທີ 14 ມັງກອນ ໄດ້ຈັດກອງປະຊຸມເພື່ອຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ເກືອໂປຕາສ (ເກືອກາລີ) ໂດຍໄດ້ຮັບຟັງການລາຍງານຈາກຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ, ອົງການປົກຄອງທ້ອງຖິ່ນ (ນວ, ເມືອງບ່ອນໂຄງການຕັ້ງຢູ່); ບັນດາຜູ້ເຂົ້າຮ່ວມໄດ້ແລກປ່ຽນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ພ້ອມທັງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ບັນຫາຂໍ້ຄົງຄ້າງ ແລະ ຊອກຫາວິທີການແກ້ໄຂ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຊອກຄົ້ນ, ສຳຫຼວດແລະຂຸດຄົ້ນແຮ່ເກືອໂປຕາສ ຢູ່ນະຄອນຫຼວງວຽງຈັນ. ທັງນີ້, ກໍເພື່ອເກັບກຳຂໍ້ມູນພື້ນຖານ ເພື່ອເປັນບ່ອນອີງສັງລວມລາຍງານຕໍ່ ຄປຈສພຊ ພິຈາລະນາ ແລະ ມີທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ.

ຈາກນັ້ນ, ຄະນະໄດ້ລົງຕິດຕາມເບິ່ງການເຮັດວຽກຢູ່ພື້ນທີ່ຕົວຈິງຂອງໂຄງການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ເກືອໂປຕາສ ຢູ່ເຂດເມືອງປາກງື່ມ ແລະ ເຂດເມືອງໄຊທານີ ຂອງບໍລິສັດ ສີສວນ ອາໂບບແອດເວັນເທດ ໂລມອນ ມາຍນິງ (ລາວ) ຈຳກັດ ແລະ ບໍລິສັດ ຈ້າງເກີ (ລາວ) ພັດທະນາບໍ່ແຮ່ ຈຳກັດ ພ້ອມທັງຮັບຟັງການລາຍງານໂດຍຫຍໍ້ການດຳເນີນກິດຈະການຂອງໂຄງການ ເຊິ່ງໄດ້ຍົກໃຫ້ເຫັນການມີສ່ວນຮ່ວມພັດທະນາເຂດບ້ານ, ເມືອງ ທີ່ຢູ່ບໍລິເວນອ້ອມຂ້າງໂຄງການ ເປັນຕົ້ນ: ການປະຕິບັດພັນທະໃຫ້ແກ່ລັດຖະບານ, ງົບປະມານຊ່ວຍເຫຼືອທາງດ້ານວຽກງານບໍລິຫານ, ສ້າງພື້ນຖານໂຄງລ່າງ, ທຶນພັດທະນາຊຸມຊົນ, ວຽກງານກ່ຽວກັບສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ, ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນແລະອື່ນໆ.

ໃນໂອກາດນີ້, ທ່ານນາງ ປິ່ງຄຳ ລາຊະສິມມາ ໄດ້ໃຫ້ທິດຊີ້ນຳ ແລະ ສະເໜີພາກສ່ວນທີ່ກ່ຽວຂ້ອງຂອງອົງການຈັດຕັ້ງລັດ ແລະ ຜູ້ພັດທະນາໂຄງການ ໃຫ້ເອົາໃຈໃສ່ແກ້ໄຂບັນຫາຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແລະ ປະຕິບັດວຽກງານຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ເກືອໂປຕາສ ຢູ່ນະຄອນຫຼວງວຽງຈັນ ກໍຄືຢູ່ ສປປລາວ ໃຫ້ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ2030 ສະບັບເລກທີ95/ສພຊ, ລົງວັນທີ 18 ກໍລະກົດ 2023, ກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.



# ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ



(ສພຊ)-ວັນທີ 16-17 ມັງກອນນີ້ທີ່ເມືອງແປກແຂວງຊຽງຂວາງ ໄດ້ມີກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ໂດຍການເປັນປະທານຂອງທ່ານ ຣສ. ປອ. ພູວົງ ອຸ່ນຄຳແສນ ກຳມະການສູນກາງພັກ, ຫົວໜ້າສະຖາບັນການເມືອງແລະການປົກຄອງແຫ່ງຊາດ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ), ຮອງຫົວໜ້າອະນຸກຳມະການເນື້ອໃນ; ເຂົ້າຮ່ວມມີທ່ານບຸນໂຮມເທດທານີຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຊຽງຂວາງ, ບັນດາທ່ານການນຳຈາກອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກຳ, ແລະ ພາກສ່ວນທີ່ກ່ຽວຂ້ອງຂອງ 3 ແຂວງ ຄື: ຊຽງຂວາງ, ຫົວພັນ ແລະ ໄຊສົມບູນ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອປະກອບຄຳເຫັນເຂົ້າໃສ່ເນື້ອໃນຮ່າງລັດຖະທຳມະນູນສະບັບປັບປຸງ ໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຮັດໃຫ້ຮ່າງລັດຖະທຳມະນູນກາຍເປັນສະບັບສົມບູນ; ເພື່ອເຊື່ອມຊຶມ ແລະ ສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງຕໍ່ຮ່າງລັດຖະທຳມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມ ໃຫ້ດີຂຶ້ນກວ່າເກົ່າ, ຮັບປະກັນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ ທັງເປັນການປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດໃນປີນີ້.

ບັນດາທ່ານຜູ້ແທນກອງປະຊຸມ ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນ ແລະ ປະກອບຄຳເຫັນທີ່ເປັນປະໂຫຍດສູງໃຫ້ແກ່ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ນຳໄປຄົ້ນຄວ້າ ແລະ ສືບຕໍ່ປັບປຸງໃຫ້ເປັນສະບັບສົມບູນ, ເຊິ່ງກອງເລຂາກອງປະຊຸມຈະຮີບຮ້ອນບັນທຶກບັນດາຄຳເຫັນ ແລະ ສະຫຼຸບຜົນຂອງກອງປະຊຸມຄັ້ງນີ້ ເພື່ອລາຍງານໃຫ້ຄະນະປະຈຳການ ຄລຊ ຮັບຊາບໂດຍໄວ.

ທ່ານ ຣສ. ປອ. ພູວົງ ອຸ່ນຄຳແສນ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ໄດ້ສຳເລັດລົງຢ່າງຈົບງາມ, ແຕ່ການປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນນັ້ນ ຍັງເປັນວຽກງານໜຶ່ງທີ່ສຳຄັນຂອງລັດເຮົາ ທີ່ຍັງຕ້ອງສືບຕໍ່ຮີບຮ້ອນເອົາ ໃຈໃສ່ຄົ້ນຄວ້າແລະຮຽບຮຽງ ພາຍຫຼັງສຳເລັດບັ້ນທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນໃນທົ່ວປະເທດ ເພື່ອສາມາດນຳໄປສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃນທ້າຍເດືອນມີນານີ້ພິຈາລະນາ, ຮັບຮອງເອົາ. ທ່ານກ່າວອີກວ່າ: ການສ້າງ ແລະ ປັບປຸງລັດຖະທຳມະນູນ ເປັນວຽກງານທີ່ສຳຄັນທີ່ສຸດ, ແຕ່ການຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນເປັນຈິງ, ການນຳເອົາລັດຖະທຳມະນູນ ແລະ ກົດໝາຍ ເຂົ້າສູ່ຊີວິດຕົວຈິງຂອງທົ່ວສັງຄົມນັ້ນ ເປັນວຽກງານໜຶ່ງທີ່ມີຄວາມໝາຍສຳຄັນກວ່າການສ້າງ ແລະ ປັບປຸງລັດຖະທຳມະນູນຫຼາຍສິບເທົ່າ. ພ້ອມນັ້ນ, ທ່ານຍັງຮຽກຮ້ອງສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ຜູ້ປະກອບການທັງພາກລັດ ແລະ ເອກະຊົນ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ກຳມະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ປັນຍາຊົນ ແລະ ປະຊາຊົນລາວບັນດາເຜົ່າ ຈົ່ງພ້ອມກັນຍົກສູງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເຂັ້ມງວດ ແລະ ສັກສິດກວ່າເກົ່າ; ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໃນທົ່ວພັກ, ທົ່ວລັດ, ທົ່ວປວງຊົນ ບົນພື້ນຖານລັດຖະທຳມະນູນແລະກົດໝາຍ, ເດັດດ່ຽວໝຽວແໜ້ນສູ້ຊົນຜ່ານຜ່າອຸປະສັກຕ່າງໆ ເພື່ອປົກປັກຮັກສາປະເທດຊາດໄວ້ຢ່າງໝັ້ນຄົງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນແລະມີໄຊ.

**(ນາງ ອາລີນ ສຸພົມມະປະດິດ)**



# ທາບທາມຄໍາເຫັນໃສ່ຮ່າງລັດຖະທໍາມະນູນ



(ສພຊ) - ເພື່ອເຮັດໃຫ້ຮ່າງລັດຖະທໍາມະນູນສະບັບປັບປຸງປີ2025 ມີເນື້ອໃນຄົບຖ້ວນ, ຮັດກຸມແລະສອດຄ່ອງກັບໂຄງການການເມືອງຂອງພັກ ສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວແລະເປັນການເຊື່ອມຊຶມແລະສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງ ກ່ຽວກັບຮ່າງລັດຖະທໍາມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທໍາມະນູນໃນທົ່ວສັງຄົມໃຫ້ດີຂຶ້ນກວ່າເກົ່າ; ທັງເປັນການປະກອບ ສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດໍາເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສໍາຄັນຂອງຊາດໃນປີ 2025.

ສະນັ້ນ, ໃນວັນທີ 16-17 ມັງກອນ 2025 ຄະນະກໍາມະການລະດັບຊາດປັບປຸງລັດຖະທໍາມະນູນ ຈຶ່ງໄດ້ຈັດກອງປະຊຸມທາບທາມລັດຖະທໍາມະນູນສໍາລັບ 3 ແຂວງຄື: ສະຫວັນນະເຂດ, ຄໍາມ່ວນ ແລະ ຈໍາປາສັກ ເຊິ່ງຈັດຂຶ້ນທີ່ແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ລາວປ່າວຊົ່ງ ນະວົງໄຊ ກໍາມະການສູນກາງພັກ, ຮອງຫົວໜ້າຄະນະໂຄສະນາອົບຮົບສູນກາງພັກ, ຄະນະກໍາມະການລະດັບຊາດປັບປຸງລັດຖະທໍາມະນູນ, ມີທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ທ່ານ ອໍາໄພ ຈິດມານົບ ຮອງປະທານກໍາມາທິການກົດໝາຍສະພາແຫ່ງຊາດ, ບັນດາທ່ານການນໍາຈາກອົງການຈັດຕັ້ງພັກ-ລັດ, ບັນດາພະແນການ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກໍາ, ແລະ ພາກສ່ວນທີ່ກ່ຽວຂ້ອງຈາກ3ແຂວງຄື: ຄໍາມ່ວນ, ສະຫວັນນະເຂດ ແລະ ຈໍາປາສັກ ເຂົ້າຮ່ວມ 90 ກວ່າທ່ານ.

ໃນກອງປະຊຸມ, ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທໍາມະນູນ ຈາກທ່ານ ອໍາໄພ ຈິດມານົບ ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄໍາເຫັນຢ່າງມີຈຸດສຸມແລະເປັນປະໂຫຍດ ເພື່ອໃຫ້ຄະນະກໍາມະການລະດັບຊາດປັບປຸງລັດຖະທໍາມະນູນນໍາຄໍາເຫັນໄປຄົ້ນຄວ້າແລະປັບປຸງຮ່າງລັດຖະທໍາມະນູນໃຫ້ເປັນສະບັບສົມບູນ.

**(ກົງທະນູຄໍາ ພິພັດເສລີ)**

# ປະກອບຄໍາເຫັນໃສ່ຮ່າງມະຕິ ການປະຕິບັດນະໂຍບາຍພາຍໃນ ສພຊ

(ສພຊ) - ກອງປະຊຸມປຶກສາຫາລື ແລະ ປະກອບຄໍາເຫັນໃສ່ຮ່າງມະຕິວ່າດ້ວຍການປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ(ສພຊ) ໄດ້ຈັດຂຶ້ນໃນວັນທີ18-19ມັງກອນ2025 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ອໍາໄພວອນ ລ້ອມບຸນແພງ ກໍາມະການສໍາຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີທ່ານຮອງປະທານກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ, ບັນດາທ່ານ ຮອງເລຂາທິການສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກແລະລັດຖະກອນວິຊາການ ຈາກພາກສ່ວນທີ່ກ່ຽວຂ້ອງຂອງ ສພຊ ເຂົ້າຮ່ວມ 50 ກວ່າທ່ານ.




ທ່ານ ນາງ ອໍາໄພວອນ ລ້ອມບຸນແພງ ມີຄໍາເຫັນວ່າ: ການປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນ ເປັນວຽກງານທີ່ມີຄວາມສໍາຄັນ, ລະອຽດອ່ອນ ຕິດພັນເຖິງສິດຜົນປະໂຫຍດຂອງພະນັກງານ-ລັດຖະກອນ ແລະ ຍາດພີ່ນ້ອງ ໂດຍສະເພາະແມ່ນນະໂຍບາຍດ້ານຕ່າງໆ ບໍ່ວ່າຈະເປັນນະໂຍບາຍດ້ານການຍົກລະດັບຄວາມຮູ້, ດ້ານສຸຂະພາບ; ພ້ອມກັນນີ້, ຍັງເປັນນະໂຍບາຍລວມຂອງພັກ-ລັດ ກໍານົດອອກໃນແຕ່ລະໄລຍະ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອປຶກສາຫາລື ແລະ ປະກອບຄໍາເຫັນໃສ່ຮ່າງມະຕິວ່າດ້ວຍການປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ມີຄວາມຊັດເຈນ, ຄົບຖ້ວນ ແລະ ຮັດກຸມ ເພື່ອນໍາເອົາຜົນຂອງການປະກອບຄໍາເຫັນ ໄປປັບປຸງ ແລະ ຂໍການລົງລາຍເຊັນຈາກຄະນະປະຈໍາສະພາແຫ່ງຊາດ.

ບັນດາຜູ້ເຂົ້າຮ່ວມໄດ້ເປັນເຈົ້າການລົງເລິກຄົ້ນຄວ້າ, ປະກອບຄໍາຄິດຄໍາເຫັນເປັນແຕ່ລະມາດຕາຢ່າງກົງໄປກົງມາ ຕາມຄໍາຖາມເຈາະຈີ້ມຂອງປະທານກອງປະຊຸມ ເພື່ອເຮັດໃຫ້ເອກະສານດັ່ງກ່າວມີຄວາມຄົບຖ້ວນ, ສົມບູນທາງດ້ານເນື້ອໃນ, ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດໃນສະເພາະໜ້າແລະຍາວນານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມ ຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**



# ກອງປະຊຸມກໍາມະບານຮາກຖານ ກກໝ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກໍາມະບານຮາກຖານກໍາມາທິການກົດໝາຍ (ກກໝ) ໄດ້ຈັດຂຶ້ນເມື່ອວັນສຸກທີ 10 ມັງກອນຜ່ານມາ ໂດຍການເປັນປະທານຂອງສະຫາຍ ນາງ ພິມມາລາ ພັນລຸວົງ ຮັກສາການປະທານກໍາມະບານຮາກຖານກໍາມາທິການກົດໝາຍ; ມີສະຫາຍ ຄໍາແພງ ວິລະພັນ ຄະນະພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານກໍາມາທິການກົດໝາຍ, ສະຫາຍ ອໍາໄພ ຈິດມານົບ ຄະນະພັກ, ປະທານຄະນະບໍລິຫານງານສະຫະພັນກໍາມະບານສະພາແຫ່ງຊາດແລະແຂກຖືກເຊີນ ເຂົ້າຮ່ວມທັງໝົດ 36 ສະຫາຍ ເປັນຍິງ 15 ສະຫາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງກໍາມະບານຮາກຖານກໍາມາທິການກົດໝາຍ ຄື: 1. ຕີລາຄາສະພາບການເຄື່ອນໄຫວວຽກງານຂອງກໍາມະບານຮາກຖານ ໃນໄລຍະ 5 ປີຜ່ານມາ (2020-2024), ໃນນັ້ນ ໄດ້ຍົກໃຫ້ເຫັນຜົນງານດ້ານດີ, ບາງຂໍ້ຄົງຄ້າງ ແລະ ສາເຫດທີ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງກໍາມະບານຮາກຖານ ກກໝ ສາມາດຈັດຕັ້ງປະຕິບັດໄດ້ດີຂຶ້ນໃນຕໍ່ໜ້າ; 2. ທິດທາງແຜນການເຄື່ອນໄຫວວຽກງານໃນໄລຍະ5ປີຕໍ່ໜ້າ(2025-2029) ໃນນັ້ນ, ບັນຫາສໍາຄັນຕົ້ນຕໍແມ່ນເພີ່ມທະວີການສຶກສາອົບຮົມແນວຄິດ, ການຊ່ວຍເຫຼືອ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກກໍາມະບານພາຍໃນຮາກຖານ ຕິດພັນກັບການເປັນເສນາທິການທີ່ດີໃຫ້ແກ່ໜ່ວຍພັກຮາກຖານ ກກໝ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ5ເປັນເຈົ້າແລະແຜນການທີ່ວາງໄວ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ. ຮັບຮອງເອົາບົດສໍາຫຼວດການນໍາພາ-ຊີ້ນໍາຂອງຄະນະກໍາມະບານຮາກຖານກໍາມາທິການກົດໝາຍຕໍ່ວຽກງານກໍາມະບານຕະຫຼອດໄລຍະ 5 ປີຜ່ານມາ.

ຜູ້ແທນກອງປະຊຸມ 23 ສະຫາຍ, ຍິງ 8 ສະຫາຍ ໄດ້ນໍາໃຊ້ສິດຂອງຕົນປ່ອນບັດຄັດເລືອກເອົາຄະນະກໍາມະບານຮາກຖານກໍາມາທິການກົດໝາຍ ຊຸດທີ III ຈໍານວນ 5 ສະຫາຍ, ຍິງ 1 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກໄດ້ຕົກລົງ: ສະຫາຍ ບຸນຍູ້ ອຸດົມເພັດ ເປັນປະທານ, ສະຫາຍ ນາງ ຕິບ ເທັມອິນທະວົງ ເປັນຮອງປະທານ ແລະ ເປັນປະທານກວດກາ, ສະຫາຍສີພົງໄຊ ຊົ່ງເຢ່ຍຈື່ປັດໃຈເປັນຄະນະແລະເປັນຮອງປະທານກວດກາ; ສະຫາຍ ໂອບີ້ ຈັນດາລາ ແລະ ສະຫາຍວັນໄຊເຣີເປັນກໍາມະການ.

ສະຫາຍຄໍາແພງວິລະພັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສໍາເລັດໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານຂອງກໍາມະບານຮາກຖານກໍາມາທິການກົດໝາຍ ທີ່ສາມາດຍາດມາໄດ້ໃນໄລຍະ5ປີຜ່ານມາທັງມີຄໍາເຫັນເນັ້ນໜັກໃຫ້ສືບຕໍ່ສຶກສາອົບຮົມວຽກງານການເມືອງ-ແນວຄິດ, ຄຸນທາດການເມືອງ ຄຸນສົມບັດສິນທໍາປະຕິວັດ, ຮັກຊາດ ຮັກລະບອບປະຊາທິປະໄຕ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວວຽກງານ ແລະ ການດໍາລົງຊີວິດ; ກໍ່ສ້າງ, ສ່ອງແສງ ຕໍານິ-ສິ່ງຂາວ ເຊິ່ງກັນແລະກັນ ເພື່ອໃຫ້ກາຍເປັນພະນັກງານສືບທອດປ່ຽນແທນໃນຕໍ່ໜ້າ ພ້ອມທັງເອົາໃຈໃສ່ຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ, ເຕັກໂນໂລຊີແລະພາສາຕ່າງປະເທດ ເພື່ອຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ກໍາມາທິການ ກໍຄືສະພາແຫ່ງຊາດ; ເອົາໃຈໃສ່ປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກໍາມະບານດ້ວຍຄວາມຮັບຜິດຊອບສູງ, ໃຫ້ມີຜົນສາເລັດຕາມຄາດໝາຍ; ເຕົ້າໂຮມຄວາມສາມັກຄີພາຍໃນ, ຊຸກຍູ້ ແລະຊ່ວຍເຫຼືອສະມາຊິກກໍາມະບານພາຍໃນຮາກຖານ ປະກອບສ່ວນ ແລະ ເຂົ້າຮ່ວມກິດຈະກໍາລວມຕ່າງໆຂອງອົງການຈັດຕັ້ງຢ່າງຫ້າວຫັນ ແລະ ເປັນຂະບວນການ.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກລະດັບຄວາມສາມາດໃນການປະຕິບັດ ພາລະບົດບາດການເປັນເສນາທິການ



(ສປນວ) - ກອງປະຊຸມເຝິກອົບຮົມວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນ, ພະນັກງານ-ລັດຖະກອນ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ(ສປນວ) ແລະ ພະນັກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ(ສສນວ)ປະຈໍາເຂດເລືອກຕັ້ງເມືອງ ໂດຍການເປັນປະທານຂອງທ່ານ ບຸນທາມ ພຸດທະວົງສາກໍາມະການພັກນະຄອນຫຼວງ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ເຊິ່ງມີທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກນະຄອນຫຼວງ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ; ວິທະຍາກອນຈາກບັນດາຄະນະກໍາມະການຂອງ ສປນວ, ກົມພິທີການທູດ ກະຊວງການຕ່າງປະເທດ, ອະດີດຫົວໜ້າຫ້ອງການມະຫາວິທະຍາໄລແຫ່ງຊາດ (ມຊ) ແລະ ຄະນະວິທະຍາສາດທໍາມະຊາດ ມຊ ພ້ອມດ້ວຍສໍາມະນາກອນຄື: ປະທານ-ຮອງປະທານຄະນະກໍາມະການສປນວ, ຫົວໜ້າ-ຮອງຫົວໜ້າຄະນະ ສສນວ ປະຈໍາເຂດເລືອກຕັ້ງ 9 ເມືອງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຈາກ ສປນວ ແລະ ຄະນະ ສສນວ ປະຈໍາເຂດເລືອກຕັ້ງ 9 ເມືອງ ເຂົ້າຮ່ວມທັງໝົດ 89 ທ່ານ.

ທັງນີ້, ກໍເພື່ອຍົກລະດັບຂີດຄວາມສາມາດໃນການປະຕິບັດພາລະບົດບາດການເປັນເສນາທິການໃຫ້ແກ່ສະພາປະຊາຊົນ, ຄະນະປະຈໍາ, ບັນດາຄະນະກໍາມະການ, ຄະນະເລຂາທິການ ແລະ ຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນປະຈໍາເຂດເລືອກຕັ້ງເມືອງ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ; ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ; ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດວັດທະນະທໍາ-ສັງຄົມ; ວຽກງານພິທີການດ້ານການທູດ; ພາວະຄວາມເປັນຜູ້ນໍາ ແລະ ຄວາມຮູ້ພື້ນຖານກ່ຽວກັບການນໍາໃຊ້ Microsoft Excel ເພື່ອຍົກສູງປະສິດທິພາບການເຄື່ອນໄຫວວຽກງານໃຫ້ນັບມື້ມີຄຸນນະພາບສູງຂຶ້ນ ແນໃສ່ຮັບປະກັນການປະຕິບັດວຽກງານຂອງ ສປນວ ຊຸດທີ II ໃຫ້ບັນລຸຕາມແຜນການທີ່ວາງໄວ້ໃນແຕ່ລະໄລຍະ.

ຜູ້ເຂົ້າຮ່ວມໄດ້ມີຄໍາເຫັນແລກປ່ຽນບົດຮຽນຕໍ່ບັນດາເນື້ອໃນທີ່ນໍາມາເຝິກອົບຮົມຄັ້ງນີ້ຢ່າງເປັນຂະບວນຟົດຟື້ນຕໍ່ບັນຫາທີ່ຕົນເອງມີຄວາມສົນໃຈພ້ອມທັງມີການຈັດແບ່ງກຸ່ມປະຕິບັດຕົວຈິງ ເພື່ອເປັນຄວາມຮູ້ພື້ນຖານໃຫ້ແກ່ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມແລະສາມາດນໍາໄປຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານໃນການເປັນເສນາທິການໃຫ້ແກ່ການເຄື່ອນໄຫວວຽກງານການນໍາຂອງຕົນ ໃຫ້ມີຄວາມເຂັ້ມແຂງ.

ການເຝິກອົບຮົມ ທີ່ຈັດຂຶ້ນຢູ່ເມືອງວັງວຽງ ແຂວງວຽງຈັນ ລະຫວ່າງວັນທີ 9-11 ມັງກອນຜ່ານມານີ້ ໄດ້ຮັບການສະໜັບສະໜູນແລະຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ຈັນມະລີ ວົງໄຊ)**

# ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ) - ວັນທີ 13-15 ມັງກອນ 2025 ທີ່ສະໂມສອນແຂວງຫຼວງນໍ້າທາ, ສະໂມສອນເມືອງລອງ, ສະໂມສອນເມືອງສິງ ແລະບ້ານພະຍາຫຼວງຄໍາປີງ; ທ່ານ ພົຕ. ປອ. ວົງສັກ ພົນທະວົງ ຄະນະປະຈໍາສະພາແຫ່ງຊາດ(ສພຊ), ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະມາຊິກສະພາແຫ່ງຊາດ(ສສຊ) ປະຈໍາເຂດເລືອກຕັ້ງທີ 3, ທ່ານ ຄໍາຟອງ ອິນມານີ ປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເຜີຍແຜ່ເນື້ອໃນຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ຂອງ ສພຂ ຫຼວງນໍ້າທາ ຊຸດທີ II ເຊິ່ງມີນາຍ ແລະ ພົນທະຫານ, ນາຍ ແລະ ພົນຕໍາຫຼວດຂອງແຂວງ, ການນໍາ ແລະ ພະນັກງານຫຼັກແຫຼ່ງຂອງເມືອງ, ຄະນະພັກຮາກຖານກຸ່ມບ້ານ, ອໍານາດການປົກຄອງບ້ານ ພ້ອມດ້ວຍປະຊາຊົນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ພົຕ. ປອ. ວົງສັກ ພົນທະວົງ ໄດ້ເຜີຍແຜ່ເນື້ອໃນຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ເຊິ່ງໄດ້ພິຈາລະນາ, ຮັບຮອງເອົາວຽກງານສໍາຄັນຂອງຊາດ ເປັນຕົ້ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2024, ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2023, ວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກໍາ ຮອດປີ 2030, ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ.

ທ່ານ ຄໍາຟອງ ອິນມານີ ໄດ້ເຜີຍແຜ່ເນື້ອໃນຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຫຼວງນໍ້າທາ ຊຸດທີ II ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນຂອງແຂວງ ເປັນຕົ້ນ: ວຽກງານອົງການປົກຄອງແຂວງ ປະຈໍາປີ 2024 ແລະ ທິດທາງແຜນການປີ 2025; ວຽກງານໄອຍະການ ແລະສານປະຊາຊົນແຂວງ, ວຽກງານສະພາປະຊາຊົນແຂວງ ປະຈໍາປີ 2024 ແລະ ທິດທາງແຜນການປີ 2025; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາກິລາກາຍຍະກໍາຂອງແຂວງ (ສະບັບປັບປຸງ) ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ (ສະບັບປັບປຸງ); ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນຟື້ນຟູ-ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1 ເມືອງນາແລ ໄລຍະທີ 1 (2020-2023)ແລະແຜນການໄລຍະທີ 2 (2025-2028).

ທ່ານ ພົຈວ. ປອ. ວັນທອນ ສຸລິສັກ ສສຊ ປະຈໍາເຂດເລືອກຕັ້ງທີ3 ໄດ້ລາຍງານກ່ຽວກັບການແກ້ໄຂບັນຫາສິ່ງເສບຕິດ, ຂໍ້ຫຍຸ້ງຍາກ ແລະ ຜົນສໍາເລັດອັນພົ້ນເດັ່ນຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍແກ້ໄຂບັນຫາຢາເສບຕິດ ແລະ ການຈັດຕັ້ງປະຕິບັດແຜນການໃນປີ 2025.

ໂອກາດນີ້ ຍັງໄດ້ມອບເຄື່ອງນຸ່ງຫົ່ມມີເສື້ອກັນໜາວ; ອຸປະກອນການຮຽນມີປຶ້ມຂຽນ, ບິກ, ບັນທັດ ແລະ ລຶດຖູ ເພື່ອແຈກຢາຍໃຫ້ນັກຮຽນຜູ້ດ້ອຍໂອກາດ ແລະ ຊຸກຍູ້ຜູ້ຮຽນດີຮຽນເກັ່ງ. ນອກນັ້ນ, ຍັງໄດ້ມອບຄອມພິວເຕີ ແລະ ງົບປະມານໃຫ້ແກ່ ສສຂ ເພື່ອນໍາໃຊ້ເຂົ້າໃນວຽກງານ.

**(ນາງ ວັນນີ ແຝງບົວວັນ)**

# ຕິດຕາມກວດກາໂຄງການລົງທຶນ ຂອງລັດ ແລະ ເອກະຊົນ ຢູ່ເມືອງປາກທາ



(ສພຂ) - ວັນທີ 6-7 ມັງກອນ 2025 ທ່ານ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ພ້ອມດ້ວຍຄະນະ ແລະ ບັນດາທ່ານຫົວໜ້າພະແນກການຂອງແຂວງ, ຫ້ອງການຂອງເມືອງປາກທາ ທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດແລະເອກະຊົນຢູ່ເມືອງປາກທາລວມມີ 3 ໂຄງການຄື: ໂຄງການຂຸດຄົ້ນຫີນກວັກຂອງບໍລິສັດຫຼວງພະບາງ ມີນີ ໂຣມາຍນິງ ຈໍາກັດ ຜູ້ດຽວຢູ່ບ້ານແຄ, ໂຄງການຂຸດຄົ້ນແຮ່-ຊາຍຂອງບໍລິສັດ PSC ຢູ່ບ້ານກ້ອນຕືນ ແລະ ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ແຕ່ບ້ານຫ້ວຍຊາຍນ້ອຍ ເມືອງຫ້ວຍຊາຍ ຫາ ບ້ານຂົວຂ້າມນໍ້າຂອງ ແລະ ບ້ານກ້ອນຕືນ ເມືອງປາກທາ ຂອງບໍລິສັດ ດວງຈະເລີນ.

ການລົງເຄື່ອນໄຫວຢູ່ພາກສະໜາມຄັ້ງນີ້ ເພື່ອຊອກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາຜົນກະທົບຕໍ່ການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າໃນຂອບເຂດທີ່ຖືກໂຄງການດັ່ງກ່າວ ໂດຍໄດ້ຮັບຟັງການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດບັນດາໜ້າວຽກຕົວຈິງຂອງແຕ່ລະບໍລິສັດຢູ່ແຕ່ລະຈຸດ. ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ຂອງບໍລິສັດ ດວງຈະເລີນ ແຕ່ບ້ານຫ້ວຍຊາຍນ້ອຍ ເມືອງຫ້ວຍຊາຍ ຫາ ບ້ານຂົວຂ້າມນໍ້າຂອງ ແລະ ບ້ານ ກ້ອນຕືນ ເມືອງປາກທາ ໄລຍະທາງ 64 ກິໂລແມັດ, ເວລາໃນການກໍ່ສ້າງ 4 ປີ (2023-2026) ໃຫ້ສໍາເລັດ, ມາເຖິງປັດຈຸບັນ ສາມາດຈັດຕັ້ງປະຕິບັດໄດ້ 5.05%; ລົງຕິດຕາມກວດກາຢູ່ພາກສະໜາມກໍ່ສ້າງເສັ້ນທາງປູຫີນ ແຕ່ ບ້ານຫ້ວຍແກ້ວ ເມືອງປາກທາຫາຊາຍແດນເມືອງປາກແບງແຂວງອຸດົມໄຊ ໄລຍະທາງ 38 ກິໂລແມັດ, ກໍານົດເວລາແມ່ນ 3 ປີ, ມາເຖິງປັດຈຸບັນ ສາມາດທະລຸໄດ້ 14 ກິໂລແມັດ.

ໂອກາດນີ້, ທ່ານ ຈອມສີ ລັດຕະນະປັນ ໄດ້ຕີລາຄາສູງຕໍ່ຜົນສໍາເລັດ, ມີຄໍາເຫັນຊີ້ນໍາ ແລະເນັ້ນໜັກໃຫ້ບັນດາບໍລິສັດເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດໂຄງການ ໂດຍສະເພາະແມ່ນຕ້ອງປະຕິບັດຕາມເນື້ອໃນບົດສັນຍາທີ່ບໍລິສັດໄດ້ລົງນາມເຊັນກັບລັດ, ສູ້ຊົນຈັດຕັ້ງປະຕິບັດໃຫ້ສໍາເລັດຕາມຄາດໝາຍ; ຕໍ່ກັບການ ຂຸດຄົ້ນຫີນກວັກ ກໍໃຫ້ເອົາໃຈໃສ່ແກ້ໄຂບໍ່ໃຫ້ມີຜົນກະທົບດ້ານສິ່ງແວດລ້ອມຕໍ່ການດໍາລົງຊີວິດຂອງປະຊາຊົນ. ພ້ອມກັນນັ້ນ, ກໍມີຄໍາເຫັນໃຫ້ພະແນກການຂອງລັດທີ່ກ່ຽວຂ້ອງ ຊ່ວຍອໍານວຍຄວາມສະດວກໃນດ້ານທີ່ມີຄວາມຫຍຸ້ງຍາກ ເປັນຕົ້ນການຊໍາລະດ້ານງົບປະມານໃນການກໍ່ສ້າງສ້ອມແປງເສັ້ນທາງເປັນແຕ່ລະໄລຍະ, ກໍາລັງແຮງງານ (ໂຊເຟີຂັບລົດກົນຈັກໜັກ) ທີ່ບໍ່ພຽງພໍຕໍ່ຄວາມຕ້ອງການຕົວຈິງ.

**(ນາງ ຂັນຖະໜອມ ແກ້ວມະນີ)**

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON
ວັນທີ 17-24/01/2025


# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ເມືອງຊຽງຮ່ອນ ແລະ ເມືອງຄອບ




(ສພຂ) - ວັນທີ 7-10 ມັງກອນຜ່ານມາ, ທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ພ້ອມດ້ວຍຄະນະ ໄດ້ນຳເອົາເນື້ອໃນຈິດໃຈກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ໄປເຜີຍແຜ່ເຊື່ອມຊຶມໃຫ້ແກ່ຜູ້ມີສິດເລືອກຕັ້ງຢູ່ເມືອງຊຽງຮ່ອນແລະເມືອງຄອບ ລວມມີ 11 ຈຸດ ໃນນັ້ນມີ 9 ບ້ານ ແລະ 2 ສຳນັກງານອົງການ ເຊິ່ງມີບັນດາຄະນະພັກ, ຄະນະນຳ, ພະນັກງານອາວຸໂສບຳນານ, ຄະນະບັນຊາ, ພະນັກງານຫຼັກແຫຼ່ງຂອງເມືອງ ຕະຫຼອດຮອດອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງ.

ໃນການເຄື່ອນໄຫວເຜີຍແຜ່ຄັ້ງນີ້, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງບັນດາ ເມືອງ, ບ້ານ ໂດຍສັງເຂບ; ຈາກນັ້ນ, ບັນດາທ່ານສະມາຊິກສະພາ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໂດຍຍົກໃຫ້ເຫັນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນທີ່ອອກເປັນມະຕິ ເປັນຕົ້ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວຽກງານກວດສອບ-ກວດກາ, ວຽກງານຍຸດທະສາດການສຶກສາ, ວຽກງານການຄຸ້ມຄອງພັດທະນາທີ່ດິນກະສິກຳ, ວຽກງານສາມສ້າງ, ວຽກງານຂອງສານປະຊາຊົນແລະອົງການໄອຍະການປະຊາຊົນ, ການສ້າງແລະປັບປຸງກົດໝາຍ, ແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີII; ນອກນັ້ນ, ຍັງໄດ້ຍົກໃຫ້ເຫັນສະພາບການຕ່າງໆຂອງໂລກແລະພາກພື້ນ ເວົ້າລວມ, ເວົ້າສະເພາະກໍຄືສະພາບການທີ່ພວມເກີດຂຶ້ນຢູ່ພາຍໃນປະເທດ. ທັງນີ້, ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນສຳຄັນທີ່ກອງປະຊຸມ ສພຊ ແລະ ສພຂ ໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ທັງເປັນການທັນລົງຮາກຖານ, ເກັບກຳ ຄຳຄິດຄຳເຫັນ, ຄຳສະເໜີຕ່າງໆຂອງຜູ້ມີສິດເລືອກຕັ້ງ ຕໍ່ການສ້າງສາພັດທະນາປະເທດຊາດ.

**(ອິນທີ ຊຽວສີຟ້າ)**

# ເຝິກອົບຮົມການປະສານງານລະຫວ່າງສພຂ ກັບອົງການປົກຄອງແຂວງ ແລະ ເມືອງ



(ສພຂ)-ວັນທີ 13-14 ມັງກອນຜ່ານມາທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ແຂວງໄຊຍະບູລີ ໄດ້ມີກອງປະຊຸມເຝິກອົບຮົມວຽກງານພົວພັນປະສານງານລະຫວ່າງສະພາປະຊາຊົນແຂວງ (ສພຂ) ກັບ ອົງການປົກຄອງແຂວງ ແລະ ອົງການປົກຄອງເມືອງ ໂດຍການເປັນປະທານຂອງທ່ານ ນາງ ວິລະພອນ ທອງພົມ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ເຊິ່ງມີທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກພາແຫ່ງຊາດ; ບັນດາທ່ານຄະນະປະຈຳ ແລະ ຮອງປະທານຄະນະກຳມະການ ສພຂ; ສະມາຊິກ ສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງ 11 ເມືອງ; ຮອງເລຂາທິການສພຂ; ຕາງໜ້າບັນດາພະແນກການ, ອົງການ, ກົມກອງ ພ້ອມດ້ວຍຫົວໜ້າຫ້ອງການອ້ອມຂ້າງແຂວງ; ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ທັງພາຍໃນ ສພຂແລະພະນັກງານຊ່ວຍວຽກປະຈຳເຂດເລືອກຕັ້ງເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການຍົກສູງພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນບາດກ້າວໃໝ່; ທັກສະໃນການລາຍງານ, ການຊີ້ແຈງ, ການປະກອບຄຳຄິດຄຳເຫັນແລະການຊັກຖາມໃນກອງປະຊຸມ; ຂັ້ນຕອນ, ວິທີການ ແລະ ຂະບວນການແກ້ໄຂຄຳຮ້ອງທຸກ ແລະ ກົນໄກການປະສານງານລະຫວ່າງສະພາປະຊາຊົນ ແຂວງກັບອົງການປົກຄອງແຂວງ. ຫຼັງຈາກນັ້ນ, ກໍໄດ້ພ້ອມກັນມີຄຳຄິດຄຳເຫັນ, ຄຳຖາມເຈາະຈີ້ມ ພ້ອມທັງ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ທັງນີ້, ກໍເພື່ອຍົກລະດັບບຸຄະລາກອນທີ່ຮັບຜິດຊອບວຽກງານພົວພັນປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ ຕະຫຼອດຮອດອົງການປົກຄອງເມືອງ ໃຫ້ມີຄວາມຮູ້ຄວາມເຂົ້າໃຈຢ່າງຖືກຕ້ອງຕໍ່ກັບບັນດາໜ້າທີ່ວຽກງານຂອງຕົນໃນການຮ່ວມກັນເຄື່ອນໄຫວເຜີຍແຜ່ບັນດານິຕິກຳໃຕ້ກົດໝາຍໃຫ້ສອດຄ່ອງວອງໄວທັນການ ໂດຍຜ່ານການປະສານງານຢ່າງເປັນຂັ້ນຕອນທີ່ກຳນົດໄວ້ ແລະ ມີເນື້ອໃນ ອັນເລິກເຊິ່ງທີ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດທັງເປັນການຍົກລະດັບໃຫ້ແກ່ ບັນດາ ສສຂ ກຳແໜ້ນ ແລະ ຍົກສູງພາລະບົດບາດຂອງສະພາປະຊາຊົນແຂວງ ໃຫ້ມີບາດກ້າວໃໝ່, ມີທັກສະໃນການລາຍງານ, ການຊີ້ແຈງ, ການປະກອບຄຳຄິດຄຳເຫັນຕໍ່ກອງປະຊຸມສະໄໝສາມັນ ແນໃສ່ສ້າງເຂົ້າໃຈ ຂັ້ນຕອນ, ວິທີການ ແລະ ຂະບວນການແກ້ໄຂຄຳຮ້ອງທຸກຢູ່ໃນເຂດເລືອກຕັ້ງຂອງຕົນ.

**(ອິນທີ ຊຽວສີຟ້າ)**

# ສພຂ ຫົວພັນ ສ້າງຄວາມເຂັ້ມແຂງໃຫ້ພະນັກງານ




(ສພຂ)-ວັນທີ 10-11 ມັງກອນຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນເມືອງ, ຜູ້ຊ່ວຍ ແລະພະນັກງານສພຂທີ່ຂຶ້ນກັບເມືອງຫົວເມືອງ ໂດຍການເປັນປະທານຂອງທ່ານສົມສັກດອນຈານົດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງຫົວພັນ, ມີບັນດາວິທະຍາກອນ ແລະ ສຳມະນາກອນຈາກບັນດາຫ້ອງການຕ່າງໆພາຍໃນເມືອງ ແລະ ສພຂ ເຂົ້າຮ່ວມທັງໝົດ74ທ່ານເປັນຍິງ34ທ່ານ.

ກອງປະຊຸມໄດ້ຮັບຟັງການສະເໜີບາງບົດຮຽນຂັ້ນຕອນການສ້າງ ແລະ ຄົ້ນຄວ້ານິຕິກຳໃຕ້ກົດໝາຍ ໃຫ້ແກ່ເສນາທິການສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມສາມາດເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ທັງເປັນການຍົກລະດັບຄວາມຮູ້ຄວາມສາມາດ, ສ້າງຄວາມຮູ້ຄວາມເຂົ້າໃຈໃນການເປັນເສນາທິການແລະການສ້າງຄວາມເຂັ້ມແຂງໃຫ້ບັນດາອົງການຂອງຕົນເວົ້າລວມ, ເວົ້າສະເພາະແມ່ນພະນັກງານເສນາທິການຜູ້ທີ່ເຮັດວຽກຕົວຈິງຂອງແຕ່ລະພາກສ່ວນ. ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ເຊິ່ງຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການປະຕິບັດຕົວຈິງໄລຍະຜ່ານມາ ເພື່ອຖອດຖອນເປັນບົດຮຽນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ;

ອ່ານຕໍ່ໜ້າ 12

# ກອງປະຊຸມສະໄໝສາມັນເທື່ອທີ 8 ສພຂ ຄຳມ່ວນ ຈະຈັດຂຶ້ນທ້າຍເດືອນນີ້



(ສພຂ) - ວັນທີ 8 ມັງກອນຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ ໃນການກະກຽມດຳເນີນກອງປະຊຸມສະໄໝສາ ມັນເທື່ອທີ8 ຂອງ ສພຂ ຄຳມ່ວນ ຊຸດທີ II, ໂດຍການເປັນປະທານຮ່ວມຂອງທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງໆຄຳມ່ວນ ແລະ ທ່ານ ບຸນມີ ພົມມະສອນ ປະທານຄະນະປະຈຳສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານຮອງເຈົ້າແຂວງ, ບັນດາທ່ານຄະນະປະຈຳ ແລະ ຄະນະກຳມະການ ຂອງ ສພຂ, ຫົວໜ້າ/ຮອງຫົວໜ້າພະແນກການ ແລະອົງການອ້ອມຂ້າງ, ອົງການຈັດຕັ້ງມະຫາຊົນແຂວງ ແລະ ແຂກຖືເຊີນ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອປຶກສາຫາລື ແລະ ແລກປ່ຽນຄຳເຫັນເພື່ອຄວາມເປັນເອກະພາບຕໍ່ກັບບັນດາເນື້ອໃນ ແລະ ຂອບເຂດຄວາມຮັບຄວາມຮັບຜິດຊອບຂອງອົງການປົກຄອງແຂວງ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຄຳມ່ວນ ຊຸດທີ II, ຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບກົນໄກການປະສານງານລະຫວ່າງສະພາປະຊາຊົນກັບອົງການປົກຄອງແຂວງໃນໄລຍະຜ່ານມາ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ແຜນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II; ພ້ອມກັນນັ້ນ, ຍັງໄດ້ແລກປ່ຽນຄວາມຄິດເຫັນຮ່ວມກັນ ເພື່ອປຶກສາຫາລືກ່ຽວກັບເນື້ອໃນດ້ານຕ່າງໆຂອງອົງການປົກຄອງກໍຄືບັນດາພະແນກການຂອງແຂວງ ທີ່ຈະຂຶ້ນລາຍງານ, ຊີ້ແຈງ ແລະ ຕອບຂໍ້ຊັກຖາມ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ8ເຊິ່ງຄາດວ່າຈະຈັດຂຶ້ນໃນທ້າຍເດືອນມັງກອນນີ້ ທີ່ສະໂມສອນ 21 ມີນາ (ຫຼັກ 4).

**(ເອື້ອ ມະໂນສິງ)**

## ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຢູ່ເມືອງອາດສະພອນ



(ສພຂ) - ວັນທີ 9-10 ມັງກອນນີ້, ທ່ານ ຄຳຜັນ ຄູນສະຫວັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ(ສພຂ), ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 13ແຂວງສະຫວັນນະເຂດພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ເມືອງອາດສະພອນ ໂດຍການຕ້ອນຮັບແລະຮ່ວມເຄື່ອນໄຫວຂອງທ່ານ ບຸນລັດ ລໍບານເຢັນວ່າການເລຂາພັກເມືອງ-ວ່າການເຈົ້າເມືອງ ທັງເປັນປະທານ ຄສຊ ປະຈຳເຂດເລືອກຕັ້ງເມືອງ, ທ່ານ ນາງ ອິນປອນ ພອນວິໄລ ກຳມະການພັກເມືອງ, ປະທານສະຫະ ພັນແມ່ຍິງເມືອງ, ຮອງປະທານຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງພ້ອມດ້ວຍບັນດາທ່ານກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານ-ລັດຖະກອນ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເມືອງອາດສະພອນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 468 ທ່ານ ເປັນຍິງ 155 ທ່ານ.

ການເຄື່ອນໄຫວພົບປະເຜີຍແຜ່ຄັ້ງນີ້ ແມ່ນໄດ້ລົງຢູ່ຈຸດສຸມນາເລົ່າ, ບ້ານນາມິນ ແລະ ບ້ານຫາດດອກແກ້ວເຊິ່ງໃນແຕ່ລະຈຸດ ໄດ້ຮັບຟັງລາຍງານການຊີ້ນຳ-ນຳພາວຽກງານຮອບດ້ານຂອງອຳນາດການປົກຄອງທັງ 3 ຈຸດດັ່ງ ກ່າວ; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂຊຸດທີ II ໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການເກັບກຳຄຳຄິດຄຳເຫັນຕໍ່ວຽກງານການຄຸ້ມຄອງບໍລິຫານລັດ ພ້ອມກັນນັ້ນ,ຍັງໄດ້ເປີດໂອກາດໃຫ້ການນຳຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນພາຍໃນແຕ່ລະກຸ່ມບ້ານ ໄດ້ມີຄຳຖາມ ແລະ ຄຳສະເໜີ ໂດຍສະເພາະແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ, ການສ້ອມແປງເສັ້ນທາງເລກທີ 10 ບ່ອນທີ່ສ້ອມແປງບໍ່ທັນສຳເລັດ ເຊິ່ງປັດຈຸບັນພົບຄວາມຫຍຸ້ງຍາກໃນການສັນຈອນ, ການຍົກລະດັບເສັ້ນທາງຂອງບ້ານດົງນາງາມ-ບ້ານນາມິນ (ໄລຍະທາງ 3 ກິໂລແມັດ) ແລະ ແຕ່ບ້ານນາມິນ-ບ້ານກຸດນ້ຳແລ້ງ (ໄລຍະທາງ 3 ກິໂລແມັດ), ການສ້າງຂົວຂ້າມຫ້ວຍກູ້ ທາງໄປຝາຍຊົນລະປະທານເຊຈຳພອນ. ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ກໍໄດ້ຕອບຄຳຖາມຂອງພໍ່ແມ່ປະຊາຊົນ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າ ໃຈເຖິງບັນຫາຕ່າງໆຕໍ່ກັບສະພາບການພັດທະນາປະເທດໃນໄລຍະປັດຈຸບັນ, ຮັບເອົາຄຳສະເໜີຂອງອຳນາດການປົກ ຄອງບ້ານ ແລະ ພໍ່ແມ່ປະຊາຊົນເພື່ອສະເໜີຕໍ່ຂະແໜງການກ່ຽວຂ້ອງນຳໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ ພ້ອມທັງມີຄຳເຫັນຕໍ່ກັບການພັດທະນາພື້ນຖານໂຄງລ່າງ, ການພັດທະນາເສດຖະກິດ-ສັງຄົມ, ການແກ້ໄຂບັນຫາຢາເສບຕິດແລະຮຽກຮ້ອງໃຫ້ທຸກພາກສ່ວນເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດາວຽກງານດັ່ງກ່າວ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໂອກາດດັ່ງກ່າວ, ຄະນະຍັງໄດ້ລົງຢ້ຽມຊົມຊົນລະປະທານຝາຍນ້ຳລົ້ນເຊຈຳພອນ (ແກ້ງນາມິນ) ບ້ານນາມິນ ເຊິ່ງຊົນລະປະທານແຫ່ງນີ້ ໄດ້ນຳໃຊ້ເຂົ້າໃນການຜະລິດກະສິກຳຂອງພໍ່ແມ່ປະຊາຊົນຢູ່ເຂດດັ່ງກ່າວ ແລະ ເຂດໃກ້ຄຽງອີກດ້ວຍ.

**(ນາງຄອນສະຫວັນ ເມກສະຫວັນ)**

## ສພຂ ຈຳປາສັກ ຮັບຮອງມະຕິ 7 ສະບັບ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ໄດ້ນຳເນີນໃນລະຫວ່າງວັນທີ 26-27 ທັນວາ 2024 ທີ່ສະໂມສອນຫຼັກ 4 ໄດ້ອັດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ພາຍໃຕ້ການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຈຳປາສັກ ໂດຍການເຂົ້າຮ່ວມຂອງທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ທ່ານ ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆຈຳປາສັກ, ບັນດາທ່ານການນຳຂັ້ນສູງຂອງພັກ-ລັດ, ອະດີດການນຳຂັ້ນສູງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພະແນກການ-ອົງການລັດທຽບເທົ່າຂັ້ນແຂວງ, ເຈົ້າເມືອງ-ເຈົ້ານະຄອນ ແລະ ຜູ້ຕາງໜ້າຈາກພາກສ່ວນຕ່າງໆຂອງແຂວງ.

ກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາເປັນມະຕິກອງປະຊຸມຂອງສະພາປະຊາຊົນແຂວງຈຳປາສັກ 7 ສະບັບ ຄື:

1. ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ແຜນການປະຈຳປີ 2025;

2. ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ແຜນການປະຈຳປີ 2025;

3. ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກໃຕ້;

4. ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປະຈຳປີ 2022 ຂອງອົງການກວດກາລັດແຂວງ;

5. ບົດລາຍງານຂອງອົງການໄອຍະການປະຊາຊົນພາກໃຕ້ ແລະ ອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2025;

6. ບົດລາຍງານຂອງສານປະຊາຊົນພາກໃຕ້ ແລະ ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2025;

7. ບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025.

ນອກຈາກຮັບຮອງເອົາບັນດາມະຕິທີ່ກ່າວມາຂ້າງເທິງນັ້ນ, ກອງປະຊຸມຍັງໄດ້ຮັບຟັງການອະທິບາຍຊີ້ແຈງຕໍ່ບັນຫາທີ່ສະມາຊິກສະພາປະຊາຊົນແຂວງໄດ້ຕັ້ງຂຶ້ນ ຈາກຂະແໜງການທີ່ກ່ຽວຂ້ອງ. ການອອກມະຕິກອງປະຊຸມຄັ້ງນີ້ ຈະເປັນນິຕິກຳພື້ນຖານທີ່ສຳຄັນເພື່ອໃຫ້ອົງການປົກຄອງແຂວງ ສືບຕໍ່ນຳພາ-ຊີ້ນຳບັນດາຂະແໜງການ ພ້ອມທັງປຸກລະດົມປະຊາຊົນລາວບັນດາເຜົ່າຊາວແຂວງຈຳປາສັກ ສູ້ຊົນຜ່ານຜ່າຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ, ມາດຕະການທາງດ້ານເສດຖະກິດ-ສັງຄົມ ໃຫ້ມີປະສິດທິຜົນ ເພື່ອແກ້ໄຂສິ່ງອຸດຕັນໃນການຄຸ້ມຄອງ ແລະ ບໍລິຫານລັດ ໃຫ້ມີຄວາມໂລ່ງລ່ຽນຕາມກົດໝາຍກຳນົດໄວ້.

ທ່ານປະທານສະພາປະຊາຊົນແຂວງຈຳປາສັກ ໄດ້ຮຽກຮ້ອງໃຫ້ອົງການປົກຄອງແຂວງ, ອົງການທີ່ກ່ຽວຂ້ອງ ພ້ອມດ້ວຍປະຊາຊົນຊາວແຂວງຈຳປາສັກ ຈົ່ງເປັນເຈົ້າການໃນການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນໃນຄັ້ງນີ້ ໃຫ້ໄດ້ຮັບຜົນສຳເລັດ; ຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15, ສະມະຊິກສະພາປະຊາຊົນແຂວງ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາມະຕິທີ່ໄດ້ຮັບຮອງເອົາ ຕາມຂອບເຂດສິດ, ໜ້າທີ່ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**(ພາບ-ຂ່າວ: ສົມວິຈິດ ໄຊມົນຕີ ແລະ ສົມພອນ ໄຊປັນຍາ)**

## ກອງປະຊຸມ ຄປກຂ ສະຫວັນນະເຂດ



(ສພຂ) - ວັນທີ 15 ມັງກອນ 2025 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ, ຄະນະປະສານງານປົກປ້ອງລະບຽບກົດໝາຍຂັ້ນແຂວງ (ຄປກຂ) ໄດ້ຈັດກອງປະຊຸມໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ທັງເປັນປະທານ ຄປກຂ, ເຂົ້າຮ່ວມມີບັນດາທ່ານໃນຄະນະກຳມະການ ແລະ ກອງເລຂາຄະນະປະສານງານດັ່ງກ່າວ.

ຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ ເປັນອົງການຈັດຕັ້ງສະເພາະກິດໜຶ່ງທີ່ເຄື່ອນໄຫວວຽກງານຢູ່ພາຍໃຕ້ການນຳພາຊີ້ນຳໂດຍກົງຂອງຮອງເລຂາພັກແຂວງ ແນໃສ່ເຮັດໃຫ້ການປະສານສົມທົບລະຫວ່າງບັນດາພະແນກການ ແລະ ອົງການປົກປ້ອງລະບຽບກົດໝາຍຢູ່ຂັ້ນແຂວງ ໃນການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ມີຄວາມຖືກຕ້ອງ, ສອດຄ່ອງຕາມລະບຽບກົດໝາຍ, ສັກສິດແລະ ຍຸຕິທຳ; ຄົ້ນຄວ້າປຶກສາຫາລືແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ຜູ້ທີ່ເຫັນວ່າຕົນເອງບໍ່ໄດ້ຮັບຄວາມເປັນທຳຫຼືຖືກລ່ວງລະເມີດສິດທິຂອງຕົນ ຕາມລະບຽບກົດໝາຍ, ວາງວິທີການ, ມາດຕະການທີ່ຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ ແລະ ກົດໝາຍ ເພື່ອສະກັດກັ້ນ ແລະ ຕ້ານທຸກການກະທຳທີ່ລະເມີດກົດໝາຍ.

ກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ ຂອງຄະນະປະສານງານປົກປ້ອງລະບຽບກົດໝາຍຂັ້ນແຂວງ ເຊິ່ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໂດຍເນັ້ນໃສ່ແກ້ໄຂບັນຫາທີ່ມີຄວາມຫຍຸ້ງຍາກ, ເຄັ່ງຮ້ອນ ແລະ ສັງຄົມໃຫ້ຄວາມສົນໃຈ ໂດຍຖືເອົາກອງປະຊຸມ ຄປກຂ ເປັນບ່ອນປຶກສາຫາລື ແລະ ຕິດຕາມກວດກາບັນຫາສຳຄັນຕ່າງໆພາຍໃນແຂວງ, ເຮັດໃຫ້ບັນຫາທີ່ເກີດຂຶ້ນໄດ້ຮັບການແກ້ໄຂທ່ວງທັນກັບສະພາບການ ແລະ ກຳນົດເວລາ ເຊິ່ງຜ່ານມາໄດ້ຈັດກອງປະຊຸມ 4 ຄັ້ງ ມີຜູ້ເຂົ້າຮ່ວມ 88 ເທື່ອຄົນ ເປັນຍິງ 5 ເທື່ອຄົນ; ໄດ້ນຳເອົາຄຳຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳຈາກພາກສ່ວນຕ່າງໆ ມາຄົ້ນຄວ້າ ແລະ ປຶກສາຫາລືໃນກອງປະຊຸມ ມີທັງໝົດ 15 ເລື່ອງ, ມອບໃຫ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດສຳເລັດ 3 ເລື່ອງ ແລະ ຍັງສືບຕໍ່ຈັດຕັ້ງປະຕິບັດ 12 ເລື່ອງ.

ພາຍຫຼັງທີ່ໄດ້ຮັບຟັງການລາຍງານແລ້ວ, ປະທານກອງປະຊຸມກໍໄດ້ເຈາະຈີ້ມແລະ ໃຫ້ທິດຊີ້ນຳ ເຊິ່ງທ່ານໄດ້ເນັ້ນໃຫ້ທຸກທ່ານຈົ່ງພ້ອມກັນເປັນເຈົ້າການໃນການຈັດຕັ້ງປະຕິບັດສິດ, ພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນສຳເລັດ ໂດຍຕິດພັນກັບການປະສານສົມທົບລະຫວ່າງພະແນກການ, ອົງການລັດທຽບເທົ່າພະແນກການຂັ້ນແຂວງ ແລະ ອົງການປົກປ້ອງກົດໝາຍຢູ່ຂັ້ນແຂວງໃນການແກ້ໄຂ້ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ມີຄວາມຖືກຕ້ອງ, ມີຄວາມສັກສິດ, ສອດຄ່ອງ ແລະ ຍຸຕິທຳຕາມລະບຽບກົດໝາຍ ເພື່ອຮັບປະກັນຄວາມຍຸຕິທຳໃນສັງຄົມ.

**(ວັນນະສຸກ ອິນສີຊຽງໃໝ່)**

# ມອບລົດຖີບຈາກໂຄງການ "ນ້ຳໃຈຮັກລາວ" ໃຫ້ 4 ເມືອງ



(ສພຂ)-ວັນທີ 31 ທັນວາຜ່ານມາທີ່ສະໂມສອນສະພາປະຊາຊົນແຂວງ(ສພຂ)ເຊກອງ ໄດ້ມີພິທີມອບ-ຮັບລົດຖີບຈາກໂຄງການ "ນ້ຳໃຈຮັກລາວ" ໃຫ້ 4 ເມືອງຂອງແຂວງເຊກອງຄື: ລະມາມ, ທ່າແຕງ, ກະລຶມ ແລະ ດາກຈຶງ ເຊິ່ງຕາງໜ້າກ່າວມອບໂດຍທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ຕາງໜ້າກ່າວຮັບໂດຍອຳນາດການປົກຄອງ 4 ເມືອງດັ່ງກ່າວ; ມີຄະນະນຳ ສພຂ, ພະແນກສຶກສາທິການ ແລະ ກິລາແຂວງ, ຄູ-ອາຈານ ແລະ ນັກຮຽນຈາກໂຮງຮຽນມັດທະຍົມສົມບູນຊົນເຜົ່າ ເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ຄຳໄພ ສິມມາວັດ ກຳມະການພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາ ຕາງໜ້າທຸກພາກ ສ່ວນ ໄດ້ສະແດງຄວາມຂອບໃຈຢ່າງຍິ່ງໄປຍັງທຸກພາກສ່ວນກ່ຽວຂ້ອງທີ່ໃຫ້ການສະໜັບສະໜູນໃນຄັ້ງນີ້ ທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາລົດຖີບຈຳນວນດັ່ງກ່າວໄປແຈກຢາຍໃຫ້ນັກຮຽນທີ່ດ້ອຍໂອກາດ, ຜູ້ຮຽນດີຮຽນເກັ່ງຂອງໂຮງຮຽນແຕ່ລະແຫ່ງໃນ4ເມືອງ ເພື່ອໃຫ້ກຳລັງໃຈ ແລະ ເປັນພາຫະນະອຳນວຍຄວາມສະດວກໃນການໄປໂຮງຮຽນຂອງນ້ອງໆນັກຮຽນ.

ລົດຖີບທີ່ນຳມາມອບໃນຄັ້ງນີ້, ມີທັງໝົດ 55 ຄັນ ລວມມູນຄ່າປະມານ 80 ລ້ານກວ່າກີບ ເຊິ່ງໄດ້ຮັບການສະໜັບສະໜູນຈາກໂຄງການ "ນ້ຳໃຈຮັກລາວ" ຂອງມູນນິທິຈີນເພື່ອພັດທະນາຊົນນະບົດ, ໃນນັ້ນ ມອບໃຫ້ເມືອງລະມາມ 10 ຄັນ, ເມືອງທ່າແຕງ 10 ຄັນ, ເມືອງກະລຶມ 15 ຄັນ, ເມືອງດາກຈຶງ 15 ຄັນ ແລະ ໂຮງຮຽນ ມສ ຊົນເຜົ່າ 5 ຄັນ ເພື່ອນຳໄປມອບຕໍ່ໃຫ້ແກ່ນ້ອງນັກຮຽນທີ່ດ້ອຍໂອກາດ, ຜູ້ຮຽນດີຮຽນເກັ່ງ.

**(ນາງ ນາລີວັນ ແສງມະນີວົງ)**

## ຈະທາບທາມ...

(ຕໍ່ຈາກໜ້າ 1)

ນູນສະບັບປັບປຸງ ໄດ້ຮັບການຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ປັບປຸງໃຫ້ສຳເລັດເປັນສະບັບສົມບູນໂດຍພື້ນຖານ; ສະນັ້ນ, ປະຕິບັດຕາມມາດຕາ 14 ຂອງລັດຖະທຳມະນູນສະບັບປີ 2015 ແລະ ມາດຕາ 39 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບປີ 2021, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ຈຶ່ງຕົກລົງໃຫ້ນຳເອົາຮ່າງລັດຖະທຳມະນູນໄປຈັດຕັ້ງທາບທາມຄຳເຫັນທາງເລິກໂດຍຜ່ານກອງປະຊຸມ ແລະ ທາງກວ້າງ ໂດຍຜ່ານພາຫະນະສື່ມວນຊົນ ເພື່ອລະດົມຄຳເຫັນ, ສະຕິປັນຍາລວມຂອງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ, ພາກທຸລະກິດ ທັງລັດແລະເອກະຊົນກໍຄືປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງລັດຖະທຳມະນູນສະບັບປັບປຸງເປັນສະບັບທີ່ມີເນື້ອໃນຄົບຖ້ວນ, ຮັດກຸມແລະສົມບູນເພື່ອຈະນຳໄປສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ພິຈາລະນາຮັບຮອງເອົາ.

ຈຸດປະສົງ ແລະ ລະດັບຄາດໝາຍໃນການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງຄັ້ງນີ້ແມ່ນແນໃສ່: 1. ປະກອບຄຳເຫັນເຂົ້າໃສ່ເນື້ອໃນຂອງຮ່າງລັດຖະທຳມະນູນທີ່ໄດ້ປັບປຸງເຊິ່ງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ນຳມາຈັດຕັ້ງການທາບທາມຄຳເຫັນຄັ້ງນີ້ໃຫ້ເປັນສະບັບຮ່າງທີ່ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງຂອງພັກສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຮັດໃຫ້ຮ່າງລັດຖະທຳມະນູນກາຍເປັນຮ່າງສະບັບສົມບູນ; 2. ເຊື່ອມຊຶມທັດສະນະຊີ້ນຳຂອງສູນກາງພັກ ຕໍ່ການປັບປຸງລັດຖະທຳມະນູນຄັ້ງນີ້ແລະສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງຕໍ່ການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນ ເພື່ອສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມ ໃຫ້ເຂັ້ມງວດ ແລະ ສັກສິດກວ່າເກົ່າ; 3. ປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນກັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນຂອງພັກປະຊາຊົນປະຕິວັດລາວ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດໃນປີ 2025 ຄື: ວັນເກີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ຄົບຮອບ 105 ປີ, ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ ແລະ ວັນສ້າງຕັ້ງລັດແຫ່ງ ສປປລາວ ຄົບຮອບ 50 ປີ.

ສຳລັບເນື້ອໃນທີ່ສຳຄັນຕົ້ນຕໍໃນການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ມີ: 1. ຮ່າງລັດຖະທຳມະນູນສະບັບປັບປຸງ, 2. ບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນ, 3. ຄຳຖາມເຈາະຈີ້ມ ແລະ ອື່ນໆ.

ສຳລັບການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນໂດຍຜ່ານກອງປະຊຸມນັ້ນ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ຕົກລົງໃຫ້ເປີດກອງປະຊຸມຢູ່ 7 ຈຸດຄື: ຈຸດທີ 1 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງບັນດາກະຊວງ, ອົງການອ້ອມຂ້າງສູນກາງລວມທັງມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສຸຂະພາບ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈັດຢູ່ນະຄອນຫຼວງວຽງຈັນ, ວັນທີ 16 ມັງກອນ 2025; ຈຸດທີ 2 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ ຈັດຢູ່ນະຄອນຫຼວງວຽງຈັນ, ວັນທີ 17 ມັງກອນ 2025; ຈຸດທີ 3 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ຊຽງຂວາງ, ໄຊສົມບູນ ແລະ ຫົວພັນ ຈັດຢູ່ແຂວງຊຽງຂວາງ, ວັນທີ 16-17 ມັງກອນ 2025; ຈຸດທີ 4 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ສະຫວັນນະເຂດ, ຄຳມ່ວນ ແລະ ຈຳປາສັກ ຈັດຢູ່ແຂວງສະຫວັນນະເຂດ, ວັນທີ 16-17 ມັງກອນ 2025; ຈຸດທີ 5 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ ຈັດຢູ່ແຂວງຫຼວງນ້ຳທາ, ວັນທີ 23-24 ມັງກອນ 2025; ຈຸດທີ 6 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ຫຼວງພະບາງ, ໄຊຍະບູລີ ແລະ ອຸດົມໄຊ ຈັດຢູ່ແຂວງຫຼວງພະບາງ, ວັນທີ 23-24 ມັງກອນ 2025; ຈຸດທີ 7 ສຳລັບພະນັກງານນຳພາ-ຄຸ້ມຄອງຂອງ 3 ແຂວງຄື: ເຊກອງ, ສາລະວັນ ແລະ ອັດຕະປື ຈັດຢູ່ແຂວງເຊກອງ, ວັນທີ 21-22 ມັງກອນ 2025.

ສຳລັບການຈັດຕັ້ງການທາບທາມຄຳເຫັນໂດຍຜ່ານພາຫະນະສື່ມວນຊົນນັ້ນ, ຈະມີການຖະແຫຼງຂ່າວ, ຈັດລາຍການສົນທະນາກ່ຽວກັບການປັບປຸງເນື້ອໃນຮ່າງລັດຖະທຳມະນູນ; ສຳພາດບຸກຄົນໃນຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ, ຄະນະປະຈຳສະພາແຫ່ງຊາດ, ພະນັກງານບຳນານ ແລະ ຕົວແທນຂອງພາກສ່ວນຕ່າງໆ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໂດຍຜ່ານໂທລະພາບ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສື່ອື່ນໆ; ພິມເນື້ອໃນຮ່າງລັດຖະທຳມະນູນສະບັບປັບປຸງ ໃສ່ໜັງສືພິມ, ເວັບໄຊ ແລະ ອື່ນໆ.

ການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ແມ່ນໃຫ້ສຳເລັດທົ່ວປະເທດໃນເດືອນມັງກອນນີ້; ຫຼັງຈາກນັ້ນ, ຈະໄດ້ສະຫຼຸບສັງລວມຜົນຂອງການທາບທາມຄຳເຫັນເພື່ອລາຍງານຂໍທິດຊີ້ນຳຈາກຂັ້ນເທິງ ແລ້ວສືບຕໍ່ຮຽບຮຽງຮ່າງລັດຖະທຳມະນູນໃຫ້ກາຍເປັນຮ່າງສະບັບສົມບູນ.

ໃນການຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງຄັ້ງນີ້, ພວກເຮົາຈຶ່ງພ້ອມກັນເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ ແລະ ກຳແໜ້ນທັດສະນະຊີ້ນຳຂອງສູນກາງພັກປະຊາຊົນປະຕິວັດລາວ ຕໍ່ການປັບປຸງລັດຖະທຳມະນູນເພື່ອຮັບປະກັນເຮັດໃຫ້ການປະກອບຄຳເຫັນຖືກທິດ, ສອດຄ່ອງກັບແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ ແລະ ສະພາບຄວາມເປັນຈິງໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃນໄລຍະໃໝ່, ມີປະສິດທິພາບ, ປະສິດທິຜົນ.

ເນື້ອໃນທັດສະນະຊີ້ນຳຂອງສູນກາງພັກປະຊາຊົນປະຕິວັດລາວຕໍ່ການປັບປຸງລັດຖະທຳມະນູນມີ: 1. ແນໃສ່ການປັບປຸງລະບົບອຳນາດແຫ່ງລັດ ໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍຄືນິຕິກຳທີ່ຈະວາງອອກໃນຕໍ່ໜ້າ ໃຫ້ຮັບປະກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່; 2. ການປັບປຸງລັດຖະທຳມະນູນຄັ້ງນີ້ ຕົ້ນຕໍແມ່ນສຸມໃສ່ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼື ຮອງຮັບແນວທາງການເມືອງຂອງພັກ ແລະ ແນວທາງການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່ ກໍຄືແນວທາງປ່ຽນແປງໃໝ່ໃນຊຸມປີຕໍ່ໜ້າ ໂດຍສະເພາະໃນສະໄໝທີ XII ຂອງພັກ ຫາກບໍ່ແມ່ນການປັບປຸງທັງໝົດເນື້ອໃນຂອງລັດຖະທຳມະນູນ; ໝາຍວ່າ ອັນໃດທີ່ເຂົ້າໃຈເປັນເອກະພາບ, ປະຕິບັດມີປະສິດທິຜົນ, ບໍ່ມີຄວາມສັບສົນ ຫຼື ເປັນບັນຫາຫຍຸ້ງຍາກໃນການຈັດຕັ້ງປະຕິບັດກໍບໍ່ຈຳເປັນຕ້ອງປັບປຸງຕື່ມອີກ; 3. ການປັບປຸງລັດຖະທຳມະນູນ ຕ້ອງມີເນື້ອໃນສອດຄ່ອງກັບບັນດາເນື້ອໃນຂອງໂຄງການການເມືອງຂອງພັກສະບັບທີ3, ຮ່າງລາຍງານການເມືອງທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ ໂດຍສະເພາະບັນຫາບົດບາດພັກເປັນແກນນຳ, ບັນຫາຈຸດໝາຍສັງຄົມນິຍົມ, ບັນຫາເສດຖະກິດເອກະລາດເປັນເຈົ້າຕົນເອງ, ບັນຫາການແບ່ງຂັ້ນຄຸ້ມຄອງ, ການກຳນົດຊື່ເອີ້ນຕ່າງໆ ຕ້ອງປັບປຸງໄປລວງດຽວກັນ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກ່າວໃນຕອນທ້າຍວ່າ: ການສ້າງ ແລະ ປັບປຸງລັດຖະທຳມະນູນ ເປັນວຽກງານທີ່ສຳຄັນທີ່ສຸດຢູ່ແລ້ວ, ແຕ່ການຈັດຕັ້ງປະຕິບັດລັດຖະທຳມະນູນໃຫ້ເກີດດອກອອກຜົນເປັນຈິງດ້ວຍການຫັນເອົາລັດຖະທຳມະນູນເປັນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກໍຄືການຫັນເຂົ້າສູ່ຊີວິດຕົວຈິງຂອງທົ່ວສັງຄົມນັ້ນ ເປັນວຽກງານໜຶ່ງທີ່ມີຄວາມໝາຍສຳຄັນແລະມີຄວາມຫຍຸ້ງຍາກສັບສົນຍິ່ງກວ່າການສ້າງ ແລະ ປັບປຸງລັດຖະທຳມະນູນຫຼາຍສິບເທົ່າ. ສະນັ້ນ, ພວກເຮົາຈຶ່ງພ້ອມກັນປະກອບຄຳຄິດເຫັນເຮັດໃຫ້ຮ່າງລັດຖະທຳມະນູນສະບັບນີ້ ກາຍເປັນສະບັບສົມບູນ ແລະ ໃນເມື່ອສະພາແຫ່ງຊາດໄດ້ຮັບຮອງ ແລະ ຖືກປະກາດໃຊ້ໂດຍລັດຖະດຳລັດຂອງປະທານປະເທດແລ້ວ ມັນເລັ່ງທວງໃຫ້ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ, ຜູ້ປະກອບການທັງພາກລັດ ແລະ ເອກະຊົນ ກໍຄືປະຊາຊົນລາວບັນດາເຜົ່າໃນທົ່ວປະເທດຈຶ່ງພ້ອມກັນສຶກສາ, ຄົ້ນຄວ້າ ແລະ ເຊື່ອມຊຶມເນື້ອໃນຂອງລັດຖະທຳມະນູນໃຫ້ເລິກເຊິ່ງພ້ອມທັງຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເຂັ້ມງວດ, ສັກສິດ ແນໃສ່ເຮັດໃຫ້ການສ້າງລັດປະຊາທິປະໄຕປະຊາຊົນລາວພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ເປັນລັດທີ່ປົກຄອງດ້ວຍກົດໝາຍ ໃຫ້ມີຜົນສັກສິດເປັນກ້າວໆ, ຮັບປະກັນການເສີມຂະຫຍາຍສິດເປັນເຈົ້າປະເທດຊາດ, ສິດ ແລະ ປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອປົກປ້ອງຄວາມເປັນເອກະລາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ຢ່າງໝັ້ນຄົງ, ພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວ ແລະ ຫຼຸດພົ້ນອອກຈາກຄວາມຫຍຸ້ງຍາກທີ່ພວກເຮົາພວມປະສົບໃນປັດຈຸບັນ ຕາມທິດຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ເສີມຂະຫຍາຍຄວາມເປັນເຈົ້າການໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ພາປະເທດຊາດກ້າວເດີນຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມຢ່າງໜັກແໜ້ນ ແລະ ມີໄຊ.




# ຂຸດບໍ່ຖືກບໍ່ ຫຼໍ່ບໍ່ຖືກເບົ້າ

**# ດົ້ນກົບເມກ**

ເລື່ອງການກໍ່ສ້າງ ຫຼື ພັດທະນາ ຖ້າວ່າເຮັດຜິດແຜນ ຫຼື ສ້າງແຜນຜິດ ກໍຈະເຮັດໃຫ້ສູນເສຍເວລາ ແລະ ຊັບພະຍາກອນທີ່ລົງທຶນ; ຍົກຕົວຢ່າງ ຊາວນາຢາກຂຸດສະນ້ຳ-ໜອງນ້ຳ ໄວ້ໃຊ້ນ້ຳເຮັດການປູກຝັງ ເຊິ່ງຖ້າວ່າແຜນການຂຸດເຈາະບໍ່ເລິກພຽງພໍ ຫຼື ຂຸດເຈາະບໍ່ຖືກບໍ່ນ້ຳ ຍ່ອມພາໃຫ້ສູນເສຍເວລາ ເສຍຊັບຈ້າງຊ່າງເຈາະນ້ຳ, ໃນທຳນອງດຽວກັນ ເຂົາກໍເວົ້າວ່າ: ເກົາບໍ່ຖືກບ່ອນຄັນ ຫຼື ແກວ່ງຄ້ອນກາຍໝາກມ່ວງ ສຸດທ້າຍກໍບໍ່ໄດ້ຫຍັງ, ຖ້າທຽບໃສ່ບໍລິຫານຄົນ ຫຼື ບໍລິຫານວຽກ ກໍເສຍຄ່າຈ້າງໂດຍບໍ່ເກີດປະໂຫຍດໃຫ້ສ່ວນລວມ.

ຄຳເວົ້າຄົນບູຮານທີ່ບອກວ່າ: ຂຸດບໍ່ຖືກບໍ່ ຫຼໍ່ບໍ່ຖືກເບົ້ານັ້ນ ເປັນຄະຕິເຕືອນບອກວ່າ ກ່ອນຈະເຮັດໜ້າທີ່ວຽກງານອັນໃດ ຕ້ອງຮູ້ຈັກສ້າງແຜນການຢ່າງຄັກແນ່, ສຶກສາຄວາມເປັນໄປໄດ້ເພື່ອວ່າເວລາລົງມືເຮັດແທ້ກໍບໍ່ເສຍເວລາ ແລະ ບໍ່ສູນເສຍຊັບພະຍາກອນ, ຕົວຢ່າງການຫຼໍ່ພະ ຍ່ອມອາໄສເວລາການສ້າງເບົ້າຫຼໍ່ ໃຊ້ວັດຖຸ ໃຊ້ງານສິລະປະ ຖ້າວ່າໂລຫະທີ່ຕື່ມໄປ ຖອກຫຼໍ່ລົງຜິດເບົ້າ ກໍຈະພາໃຫ້ເສຍຊັບໄປທັນຕາເຫັນຢ່າລືມວ່າກ່ອນຈະປັ້ນເບົ້າຫຼໍ່ພະໄດ້ ຕ້ອງໃຊ້ເວລາ-ໃຊ້ປູນປັ້ນ ເຜົາເບົ້າໃຫ້ໄດ້ລະດັບ ກ່ອນເທທອງຫຼໍ່; ດັ່ງນັ້ນ, ຖ້າທຽບໃສ່ການສ້າງຄົນ, ຝຶກຝົນຄົນ ຖ້າວ່າເບິ່ງຄົນບໍ່ອອກເບິ່ງຄົນບໍ່ແຈ້ງ ຂໍເອົາແຕ່ຖືກໃຈ ຖ້າວ່າຜົນຜະລິດອອກມາບໍ່ໄດ້ຄຸນນະພາບ ກໍຈະພາໃຫ້ສູນເສຍເວລາ.

ຄົນບູຮານຈຶ່ງຢ້ຳເຕືອນສອນໄວ້ໃຫ້ມີສະຕິປັນຍາ ເພື່ອເບິ່ງຄົນເບິ່ງບັນຫາໃຫ້ອອກ ກ່ອນຈະລົງມືປະກອບວຽກອັນໃດສຳຄັນ ຕ້ອງເບິ່ງຄົນໃຫ້ອອກ ໃຊ້ຄົນໃຫ້ເປັນ; ໃຊ້ຄົນຕາມຄວາມຮູ້ຄວາມສາມາດ, ສ້າງໃຫ້ຖືກຄົນ ຫຼີກເວັ້ນພວກປາກຫວານກົ້ນສົ້ມ ປະເພດຄົດຂໍ້ ງໍ ໃນກະດູກ ຈະສ້າງແນວໃດກໍບໍ່ເກີດປະໂຫຍດໃຫ້ແກ່ສ່ວນລວມໄດ້ເລີຍ.

ສັງລວມແລ້ວ ເຖິງວ່າວັນເດືອນປີເຄື່ອນຍ້າຍ ມັນກໍເຮັດໜ້າທີ່ຂອງມັນ ສິ່ງສຳຄັນ ຄົນເຮົາຕ້ອງໄດ້ທົບທວນຄືນ, ຄັດສັນເລືອກເຟັ້ນທົດສອບການສ້າງຄົນວ່າ ໄດ້ເລືອກຖືກຕ້ອງ-ຮັບປະກັນຄຸນນະພາບ ຫຼື ຈະເລືອກພຽງເພາະວ່າຖືກໃຈ ແຕ່ບໍ່ຖືກກັບໜ້າວຽກ ມັນກໍແມ່ນເລື່ອງທີ່ໜ້າຄິດໜັກໃຈນໍ!






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

**ງ) ການອົບຮົມທິດສະດີ:** ສຳລັບບັນດາພະນັກງານຊັ້ນສູງ ແລະ ຊັ້ນກາງທີ່ມີຄວາມສາມາດຄົ້ນຄວ້າທິດສະດີ ຫຼື (ລະດັບວັດທະນະທຳສູງພໍສົມຄວນ ມີນ້ຳໃຈຢາກຄົ້ນຄວ້າຮ່ຳຮຽນ) ນັ້ນ, ນອກຈາກຮຽນການເມືອງ ແລະ ວຽກງານສະເພາະແລ້ວ ກໍຄວນໃຫ້ເຂົາເຈົ້າຮຽນທິດສະດີຕື່ມອີກ.

ການອົບຮົມທິດສະດີມີສອງວິທີຄື: ວິທີທີ່ໜຶ່ງ, ແມ່ນມີແຕ່ເອົາທິດສະດີອັນແຫ້ງແລ້ວມາຍັດໃສ່ໃຫ້ເຕັມສະໝອງຂອງພະນັກງານ ແລ້ວບອກໃຫ້ເຂົາເຈົ້າເຮັດໂຄງການ, ແຜນການ ແລະ ເຮັດຄຳຮຽກຮ້ອງມ່ວນໆ; ແຕ່ສ່ວນວຽກການຕົວຈິງຄືການໂຄສະນາ, ການຂົນຂວາຍປະຊາຊົນ, ການຈັດຕັ້ງ ແລະ ການກວດກາຊ້ຳພັດພຽງແຕ່ເວົ້າກາຍໆໄປ. ນັ້ນແມ່ນທິດສະດີນ້ຳເຕົ້າເປົ່າບໍ່ມີປະໂຫຍດ ວິທີທີສອງ, ແມ່ນໃນເວລາຮຽນທິດສະດີນັ້ນຕ້ອງຄົ້ນຄວ້າວຽກງານການຕົວຈິງ, ຄົ້ນຄວ້າບົດຮຽນຕົວຈິງ. ເມື່ອຮຽນແລ້ວ ຕົວພະນັກງານເອງອາດຊອກທິດທາງການເມືອງທີ່ພາໃຫ້ເຮັດວຽກງານຕົວຈິງ, ອາດກາຍເປັນຜູ້ຈັດຕັ້ງ ແລະ ນຳພາໄດ້. ນັ້ນແມ່ນທິດສະດີກັບຕົວຈິງແມ່ນປະໂຫຍດ.

ທິດສະດີແມ່ນ ອາໄສບົດຮຽນການປະຕິວັດໃນປະເທດອື່ນ ແລະ ໃນປະເທດຂອງເຮົາ, ອາໄສບົດຮຽນແຕ່ປາງກ່ອນ ແລະ ບົດຮຽນຢູ່ໃນສະໄໝປັດຈຸບັນ ລວບລວມເຂົ້າມາຈຳແນກ ແລະ ສະຫຼຸບເອົາອອກມາເປັນທິດສະດີ.

ແຕ່ຕ້ອງຊ່າງເອົາບົດຮຽນເຫຼົ່ານັ້ນມາໃຊ້. ຖ້າວ່າເຫັນຜູ່ອື່ນເຮັດແນວໃດຕົນກໍມາເຮັດຄືກັນໂລດ ກໍແມ່ນເຮັດແບບກົນຈັກ. ຕົວຢ່າງກໍຄືໄດ້ຍິນເພິ່ນເວົ້າວ່າຕໍ່ສູ້ຊົນຊັ້ນ ຕົນກໍມາວາງຄຳຂວັນວ່າຕໍ່ສູ້ຊົນຊັ້ນໂດຍບໍ່ກວດກາເບິ່ງສະພາບການຕົວຈິງຂອງປະເທດຕົນວ່າມັນເໝາະສົມ ຫຼື ບໍ່ ວ່າເຮັດແນວໃດຈຶ່ງຈະຖືກ ດັ່ງນັ້ນ ແມ່ນບໍ່ຊ່າງເອົາບົດຮຽນປະເທດອື່ນມາໃຊ້.

ອ່ານຕໍ່ສະບັບໜ້າ...



## ປະທານ...

(ຕໍ່ຈາກໜ້າ 1)

ສາກົນ. ພ້ອມກັນນັ້ນ, ກໍລາຍງານຜົນກອງປະຊຸມ ແລະ ການພົບປະສອງຝ່າຍກັບສະຫາຍ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ເຊິ່ງສອງຝ່າຍໄດ້ຢືນຢັນຮ່ວມ ກັນທີ່ຈະພ້ອມກັນຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງຂອງການນຳຂັ້ນສູງຂອງສອງພັກ, ບັນດາຂໍ້ຕົກລົງຂອງສອງລັດຖະບານທີ່ຫາກໍໄດ້ຕົກລົງກັນ; ສອງຝ່າຍໄດ້ເອກະພາບແລະລົງນາມໃນເອກະສານ 4 ສະບັບຄື: 1) ບົດບັນທຶກຄະນະກຳມະການຮ່ວມມືທະວີພາຄີລະຫວ່າງສອງລັດຖະບານ ຄັ້ງທີ 47, 2) ຂໍ້ຕົກລົງແຜນການຮ່ວມມືລະ ຫວ່າງສອງລັດຖະບານ ປີ 2025, 3) ຂໍ້ຕົກລົງແຜນການຮ່ວມມືລະຫວ່າງສອງກະຊວງສຶກສາທິການ ແລະ ກິລາ, 4) ສັນຍາຊື້-ຂາຍຖ່ານຫີນ, ໄຟຟ້າ ລະຫວ່າງສອງປະເທດ. ສອງຝ່າຍຮ່ວມກັນເພີ່ມທະວີການພົວພັນຮ່ວມມືສອງຝ່າຍໃຫ້ເຊື່ອມຈອດກັນທາງດ້ານເສດຖະກິດ, ການຄ້າ, ການເງິນ, ການສຶກສາ, ພື້ນຖານໂຄງລ່າງ, ຄົມມະນາຄົມ, ພະລັງງານ, ໄຟຟ້າ, ໂທລະຄົມ, ການທ່ອງທ່ຽວແລະອື່ນໆ; ນອກນັ້ນ, ຍັງເຫັນດີເປັນເອກະພາບຈະຊຸກຍູ້ແລະລະດົມໃຫ້ບັນດາຄູ່ຮ່ວມມືສາກົນທີ່ເໝາະສົມ ໃຫ້ເຂົ້າມາຮ່ວມມື, ລົງທຶນ ແລະສະໜັບສະໜູນບັນດາໂຄງການເຊື່ອມຕໍ່ທີ່ເປັນຍຸດທະສາດລະຫວ່າງສອງປະເທດໃຫ້ຫຼາຍຂຶ້ນ.

ສະຫາຍປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມດັ່ງກ່າວ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ເວົ້າລວມ, ກໍຄືສາຍພົວພັນຮ່ວມມືລະຫວ່າງອົງການນິຕິບັນຍັດຂອງສອງປະເທດ ໃຫ້ເປັນຮູບປະທຳຍິ່ງໆຂຶ້ນ; ຕີລາຄາສູງຕໍ່ຜົນສຳເລັດຂອງການພົບປະສອງຝ່າຍກັບສະຫາຍສອນໄຊສີພັນດອນ. ສະຫາຍປອ. ໄຊສົມພອນ ພົມວິຫານ ໄດ້ກ່າວວ່າ: ໃນນາມເປັນຕົວແທນດ້ານນິຕິບັນຍັດ ໄດ້ເອົາໃຈໃສ່ຢ່າງໃກ້ຊິດຮ່ວມກັບສະພາແຫ່ງຊາດຫວຽດນາມ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດຜົນຂອງກອງປະຊຸມສອງກົມການເມືອງທີ່ໄດ້ຕົກລົງຮ່ວມກັນ; ບັນດາໂຄງການຮ່ວມມືດ້ານເສດຖະກິດ, ການລົງທຶນ, ການຄ້າ ໃຫ້ມີຜົນສຳເລັດ ແລະ ນຳຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດລາວ-ຫວຽດນາມ ເປັນຕົ້ນແມ່ນບັນດາໂຄງການຮ່ວມມືສອງຝ່າຍທີ່ໄດ້, ກຳລັງ ແລະ ຈະຈັດຕັ້ງປະຕິບັດ: 1) ການມອບໂອນທ່າເຮືອຫວຸ້ງອາງ, 2) ໂຄງການທາງດ່ວນວຽງຈັນ-ຮ່າໂນ້ຍ, 3) ໂຄງການທາງລົດໄຟວຽງຈັນ-ທ່າແຂກ-ຫວຸ້ງອາງ, 4) ການຊື້-ຂາຍໄຟຟ້າ, 5) ການສ້າງໂຮງງານພະລັງງານຄວາມຮ້ອນຖ່ານຫີນ, 6) ໂຄງການສວນອຸທິຍານມິດຕະພາບລາວ-ຫວຽດນາມ.

**(ນາງ ອາລິນ ສຸພົມມະປະດິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ແລະບ້ານ, ຈາກນັ້ນບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຊຸດທີ II; ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ມີການແລກປ່ຽນຄຳຄິດຄຳເຫັນຕໍ່ບັນດາບັນຫາ ແລະ ຂໍ້ສະເໜີຕ່າງໆຂອງປະຊາຊົນ ໃນຈຸດທີ່ຄະນະໄດ້ລົງໄປພົບປະຢູ່ 2 ເມືອງດັ່ງກ່າວ. ຫຼັງຈາກນັ້ນ, ໄດ້ຮັບຟັງຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ເຊິ່ງບັນຫາສ່ວນໃຫຍ່ແມ່ນຕິດພັນກັບບັນຫາຄວາມຫຍຸ້ງຍາກດ້ານພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ, ລະບົບນຳໃຊ້ໄຟຟ້າຢູ່ເຂດຊົນນະບົດ, ໂຮງຮຽນມີສະພາບຂາດແຄນແລະຊຸດໂຊມ, ແລະ ບັນຫາອື່ນໆຈຳນວນໜຶ່ງ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມຂອງເມືອງທ່າປາງທອງ ແລະ ເມືອງອາດສະພັງທອງ ໃນໄລຍະຜ່ານມາ ແລະ ຮຽກຮ້ອງໃຫ້ບັນດາເມືອງ, ບ້ານ ພ້ອມດ້ວຍປະຊາຊົນໃນເຂດເລືອກຕັ້ງ ຈຶ່ງໄດ້ມີສ່ວນຮ່ວມໃນການພັດທະນາ ເພື່ອສົ່ງເສີມ ແລະ ຂະຫຍາຍທ່າແຮງທີ່ມີຂອງເມືອງ ເພື່ອປະກອບສ່ວນເຮັດໃຫ້ແຂວງສະຫວັນນະເຂດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮ້ອຍ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ.

ໃນການເຄື່ອນໄຫວຢ້ຽມຢາມຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ, ເຄື່ອງຕອງນ້ຳ, ເຄື່ອງໃຊ້ສອຍປະຈຳວັນທີ່ຈຳເປັນພ້ອມທັງປຶ້ມຂຽນ, ບິກ, ສໍດຳ ມອບໃຫ້ແຕ່ລະຈຸດ; ນອກນັ້ນ, ຍັງໄດ້ຕາງໜ້າໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງທີ 13 ໄດ້ນຳເອົາລົດຖີບທີ່ໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນເພື່ອພັດທະນາຊົນນະບົດ ຈຳນວນ 11 ຄັນ ມອບໃຫ້ນ້ອງນັກຮຽນທີ່ມີຄວາມທຸກຍາກໃນໂຮງຮຽນຕ່າງໆຂອງເມືອງທ່າປາງທອງຕື່ມອີກ.

**(ນາງ ກຸກກົກ ບຸດດາໄຊ)**



## ທາບທາມ...

(ຕໍ່ຈາກໜ້າ 1)

ສະບັບປັບປຸງ ໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງ ສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຮັດໃຫ້ຮ່າງລັດຖະທຳມະນູນກາຍເປັນສະບັບສົມບູນ; ສ້າງໂອກາດໃຫ້ປະຊາຊົນ ແລະ ຕົວແທນຂອງບັນດາຊັ້ນຄົນ ໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ແທດກັບຕົວຈິງ, ຮັບປະກັນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ ຢ່າງມີປະສິດທິພາບ, ປະສິດທິຜົນ.

ບັນດາທ່ານຜູ້ແທນກອງປະຊຸມ ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນ ແລະ ປະກອບຄຳເຫັນທີ່ເປັນປະໂຫຍດສູງໃຫ້ແກ່ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ນຳໄປຄົ້ນຄວ້າ ແລະ ສືບຕໍ່ປັບປຸງໃຫ້ເປັນສະບັບສົມບູນ, ເຊິ່ງກອງເລຂາກອງປະຊຸມ ໄດ້ບັນທຶກບັນດາຄຳເຫັນ ແລະ ສະຫຼຸບຜົນຂອງກອງປະຊຸມຄັ້ງນີ້ ເພື່ອລາຍງານໃຫ້ຄະນະປະຈຳການຄລຊລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອຂໍທິດຊີ້ນຳໃນຂັ້ນຕອນຕໍ່ໄປ.

ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ກ່າວວ່າ: ກອງປະຊຸມຄັ້ງນີ້ ໄດ້ສຳເລັດລົງຢ່າງຈົບງາມ, ແຕ່ການປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນນັ້ນ ຍັງເປັນວຽກງານໜຶ່ງທີ່ສຳຄັນຂອງລັດເຮົາທີ່ຍັງຕ້ອງສືບຕໍ່ຮີບຮ້ອນເອົາໃຈໃສ່ຄົ້ນຄວ້າ ແລະ ຮຽບຮຽງ ພາຍຫຼັງສຳເລັດຂັ້ນທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນໃນທົ່ວປະເທດ ເພື່ອສາມາດນຳໄປສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃນທ້າຍເດືອນມີນານີ້ ພິຈາລະນາ, ຮັບຮອງເອົາ. ທ່ານກ່າວອີກວ່າ: ການສ້າງ ແລະ ປັບປຸງລັດຖະທຳມະນູນ ເປັນວຽກງານທີ່ສຳຄັນທີ່ສຸດ, ແຕ່ການຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນເປັນຈິງ, ການນຳເອົາລັດຖະທຳມະນູນ ແລະ ກົດໝາຍ ເຂົ້າສູ່ຊີວິດຕົວຈິງຂອງທົ່ວສັງຄົມນັ້ນ ເປັນວຽກງານໜຶ່ງທີ່ມີຄວາມໝາຍສຳຄັນກວ່າການສ້າງ ແລະ ປັບປຸງລັດຖະທຳມະນູນ ຫຼາຍສິບເທົ່າ. ພ້ອມນັ້ນ, ທ່ານຍັງຮຽກຮ້ອງທຸກກະຊວງ, ອົງການ, ທ້ອງຖິ່ນ, ຜູ້ປະກອບການທັງພາກລັດ ແລະ ເອກະຊົນ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ກຳມະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ປັນຍາຊົນແລະປະຊາຊົນລາວບັນດາເຜົ່າ ຈົ່ງພ້ອມກັນຍົກສູງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເຂັ້ມງວດ ແລະ ສັກສິດກວ່າເກົ່າ; ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໃນທົ່ວພັກ, ທົ່ວລັດ, ທົ່ວປວງຊົນ ບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ, ເດັດດ່ຽວໜຽວແໜ້ນສູ້ຊົນຜ່ານຜ່າອຸປະສັກຕ່າງໆ ເພື່ອປົກປັກຮັກສາປະເທດຊາດໄວ້ຢ່າງໝັ້ນຄົງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ ແລະ ມີໄຊ.

**(ອານຸສອນ ພູມມີທອນ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍເປັນຕົ້ນ ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍດັດແກ້ເພີ່ມມູນຄ່າຂອງໂຄງການກໍ່ສ້າງເສັ້ນທາງເບຕົງ ແຕ່ສີແຍກໄຟແດງຕານມີໄຊ-ສາມແຍກສີເກີດນະຄອນຫຼວງວຽງຈັນ ທີ່ໄດ້ຮັບຜົນກະທົບຈາກການເໜັງຕີງຂອງອັດຕາແລກປ່ຽນ; ບົດລາຍງານກ່ຽວກັບການກະກຽມຕ້ອນຮັບປະທານສະພາສູງ ແຫ່ງ ລາຊະອານາຈັກກຳປູເຈຍ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ແລະ ການຂໍຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນອຸດສາຫະກຳ ເພື່ອຮັບໃຊ້ເຂົ້າໃນໂຄງການເຂື່ອນໄຟຟ້ານໍ້າແຫ້ຢູ່ເຂດບ້ານນໍ້າຄະເມືອງແປກ ແລະ ບ້ານຊ້າງ ເມືອງຄຳ ແຂວງຊຽງຂວາງ ຂອງບໍລິສັດ ໄຟຟ້ານໍ້າແຫ້ ຈຳກັດ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຫັນປ່ຽນທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທອງ ຢູ່ເຂດບ້ານນໍ້າພ້າວ, ບ້ານແມ່ ແລະ ບ້ານມົກຈານ ເມືອງຮຸນ ແຂວງອຸດົມໄຊ ຂອງບໍລິສັດ ວິງຟາດ ອຸດົມໄຊ ບໍ່ແຮ່ຈຳກັດ ແລະ ບົດລາຍງານກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປລາວ ຂອງທະນາຄານ ແຫ່ງ ສປປລາວ.

**(ນາງ ອາລິນ ສຸພົມມະປະດິດ)**

## ອາດ ກະວີລາວ

# ຢ່າລະເລີຍ

**# ສົມຊາຍ ແກ້ວບົວລະພາ**

❊ ໂຮມແຮງກັນຮ່ວມຕ້ານ
ໂທດພິດໄພພານໂພຍ
ຢ່າງເຊັ່ນຊຸມຢາບ້າ
ທຳໃຫ້ສູນຊົບສ້ວຍ ຊີວັງຫຼົ້ມມອດມ້ວຍ

ຊຸມຊື່ວຊາມເຊ ນີ້ນາ!
ຄຸກຄາມຊົນເຊື້ອ
ອະບາຍເບືອຊອມເບື່ອ
ຄວນຕ້ານໄຕ່ຕອງ

❊ ສັນຈອນຄະເຄື່ອນຍ້າຍ
ຄົນຄວນຈົ່ງໃຈຈຳ
ໂຮມແຮງກັນຫັນຫ້າວ
ມີສະຕິຕໍ່ຕັ້ງ

ຍາມທ່ຽວທາງຖະໜົນ
ຈື່ຈຽມກົດຫ້າມ
ທຳຕາມກົດລະບຽບ
ຍາມຍ້າຍຍວກຄົງ ແທ້ໄດ໋!

❊ ປ່າໄມ້ຄາມຄ່າລົ້ນ
ພາກັນຊູສານເສີມ
ຢ່າໄດ້ວາງວາຍເວັ້ນ
ປະປ່ອຍບາບາບບ້າ ມາທົ້ນຖາງຖົກຖົ້ມ

ຊົນສ່ອງຊອມອາໄສ
ປູກປຸນທະວີສ້າງ
ມາງເມີນຄຸນຄ່າ
ປານເປົ້າເປົ່າແປນ ບໍ່ເອົາດາຍ!

❊ ຍັງມີມາແຕ່ເຄົ້າ
ໄພ່ເພີ່ມພູນສິລະປະ
ຄົງຄ້ອຍຄຽງຄອງຄໍ້າ
ດົນຕີດັ່ງພື້ນບ້ານ ແຄນລາວປ່າວໂປ່ງໂປ້ງ

ປາງເກົ່າຄາວປະຖົມ
ທ່າຊົງຊວງຊ້ອຍ
ຖະຫຼຳນຳສານສືບ
ຄຸງແຄວ້ນດ່ານດົນ ແລ້ວໄດ!

❊ ສາສະໜາສອນສັ່ງສ້າງ
ຄຸນຄາມຄົນຄວນຄຽງ
ດູດີດອມດົມດົ້ວ
ຊາດເຊື້ອຊົມຊື່ນຊ້ອຍ ຖ້ອຍຄຳສອນຄູ່ຄ້ອງ

ສະໜານມິ່ງມູນມັງ
ສືບສານຊອມສິ້ງ
ຄຽງຄອງຄົງຄູ່
ຮອງເຫຼື້ອມຮຸ່ງສະໄຫວ ແທ້ໄດ!

## ສົມສາຍ ລະບາຍ



*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ ***ຈົ່ມ***ເຊີຍວັນທີ ***20 ມັງກອນ*** *1949-20 ມັງກອນ 2025* ***ວັນສ້າງຕັ້ງກອງທັບ***ປະຊາຊົນລາວ ຄົບຮອບ ***76 ປີ*** *ຂໍອວຍພອນໃຫ້ເຈົ້າມີຄວາມສຸກ ເຫຼົ່າທະຫານຄົນກ້າ ໜ້າທີ່ການງານກ້າວ ດາວປະດັບເຕັມບ່າ ລາບຍົດສູງສຽດຟ້າ ເດີນໜ້າຢ່າສຸດຖອຍ ໃຫ້ໄດ້ເປັນນາຍຮ້ອຍ ນາຍພັນຊັ້ນເລື່ອນ ເປັນນາຍພົນກຽດກ້ອງ ປະຊາຍ້ອງສົ່ນຈົ່ມ* ***ທ່ານເອີຍ!***

❊ ***ຕາມ***ຂ່າວໃຫ້ຮູ້ວ່າຈະມີມອບ***ອາກາດໜາວເຢັນ*** *ແຜ່ປົກຄຸມທົ່ວປະເທດ ເປັນເຫດໃຫ້ອຸນຫະພູມຕ່ຳລົງ* ***1-3 ອົງສາ*** *ຕະຫຼອດເດືອນມັງກອນນີ້ ຂໍໃຫ້ປວງປະຊາພີ່ນ້ອງຮັກສາພະລານາໄມ ໃຫ້ຫ່າງໄກໂລຄາ ພະຍາດມານແນວຮ້າຍ ເອົາໃຈໃສ່ເບິ່ງແຍງລູກເຕົ້າ ລຸງຕາເຖົ້າແກ່ ໃຫ້ຫາແພສະໄບບົ່ງຜ້າ ມາຫຸ້ມຫໍ່ໃຫ້ອຸ່ນຄືງ* ***ນັ້ນທ້ອນ!***

## ຊວນຍິ້ມ

**# ແອ່ບຕຸ້ງ**

### ເລື່ອງ: ຊອຍອີຫຼີ

ມີຊາຍຄົນໜຶ່ງ ຖືແກ້ວເຫຼົ້ານັ່ງໜ້າເສົ້າ ຢູ່ກ້ອງຕົ້ນໄມ້ໜ້າຮ້ານຂາຍເຄື່ອງແຫ່ງໜຶ່ງ, ສາຍຕາຈັບຈ້ອງຢູ່ແຕ່ກັບແກ້ວເຫຼົ້າ ແລະ ມີຊາຍໜຸ່ມຄົນໜຶ່ງຫຸ່ນສູງໃຫຍ່ບຶກບືນ ຖືແກ້ວເຫຼົ້າມາບ່າແລ້ວຍົກດື່ມໝົດຮອບດຽວ, ແລ້ວຫຼຽວເບິ່ງຊາຍທີ່ນັ່ງເສົ້າດ້ວຍຄວາມລ່າຄານ ຈຶ່ງໄປຈັບເອົາແກ້ວເຫຼົ້າຂອງຊາຍຄົນນັ້ນ ມາກິນຈົນໝົດ ເຮັດໃຫ້ຊາຍຄົນນັ້ນໄຫ້ກາກ... ຂຶ້ນຢ່າງແຮງ ຈົນຊາຍໜຸ່ມຮ່າງໃຫຍ່ໄດ້ອອຍເອົາວ່າ: ເຮັດຢອກຊື່ໆ... ດຽວຂ້ອຍຊື້ໃຫ້ໃໝ່ກະໄດ້.

ບໍ່ແມ່ນແບບນັ້ນ... ມື້ນີ້ກູຈັ່ງແມ່ນຊອຍ; ຕອນເຊົ້າຕື່ນສວາຍໄປວຽກຊ້າ ເລີຍຖືກເຈົ້ານາຍໄລ່ອອກວຽກ, ພໍຊິໄປເອົາລົດກັບບ້ານ ລົດກະຖືກລັກອີກ, ເລີຍໄດ້ຍ່າງກັບເຮືອນເປັນ 10 ກິໂລແກັດ ເພື່ອຊິໃຫ້ເມຍປອບໃຈ ກັບໄປພັດໄປເຫັນເມຍຢູ່ກັບຊູ້; ຄິດກຸ້ມໃຈຊິມານັ່ງດື່ມຢາພິດຕາຍໃຫ້ແລ້ວ... ມຶງຍັງມາຍາດເອົາຂອງກູໄປກິນອີກ... ຮື້!!!!!!!!!



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຄົບຄົນໃຫ້ເບິ່ງໜ້າ ຊາວງາມຢ່າຟ້າວເຊື່ອ
ບາດເມື່ອຈົມຄຽດແຄ້ນ ຊິອຸກເອົ້າອົ່ງຊວງ

ລັດຖະສະພາຕ່າງປະເທດ

# ສະພາຜູ້ແທນປະຊາຊົນລິບີ ຜ່ານກົດໝາຍຄວາມປອງດອງແຫ່ງຊາດ

(Xinhua) - ເມື່ອວັນອັງຄານທີ 7 ມັງກອນຜ່ານມາ, ສະພາຜູ້ແທນປະຊາຊົນລິບີທີ່ຕັ້ງຢູ່ພາກຕາເວັນອອກ ໄດ້ຮັບຮອງເອົາກົດໝາຍຄວາມປອງດອງແຫ່ງຊາດ ດ້ວຍຄະແນນສຽງສ່ວນຫຼາຍ.

ທ່ານອັບດຸລລາເບລຮີກ (Abdullah Blehig) ໂຄສົກສະພາຜູ້ແທນປະຊາຊົນ ກ່າວໃນຖະແຫຼງການວ່າ "ກອງປະຊຸມໃນວັນນີ້ ໄດ້ປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍຄວາມປອງດອງແຫ່ງຊາດ, ພາຍຫຼັງສຳເລັດການອະພິປາຍ ແລະ ພິຈາລະນາບັນດາມາດຕາຂອງຮ່າງກົດໝາຍແລ້ວ, ສະພາຜູ້ແທນປະຊາຊົນ ໄດ້ຮັບຮອງເອົາກົດໝາຍດັ່ງກ່າວ".

ເດືອນເມສາ2021, ສະພາປະທານາທິບໍດີ ທີ່ຕັ້ງຢູ່ພາກຕາເວັນຕົກ ໄດ້ປະກາດເປີດຕົວຄະນະກຳມະການລະດັບສູງເພື່ອຄວາມປອງດອງແຫ່ງຊາດລິບີ; ໃນເດືອນກັນຍາຂອງປີນັ້ນ, ຄະນະກຳມະການດັ່ງກ່າວ ກ່າວວ່າຈະຈັດກອງປະຊຸມສາກົນໃນເດືອນຕຸລາ ເພື່ອຂໍການສະໜັບສະໜູນແຜນຄວາມໝັ້ນຄົງທີ່ເປັນເຈົ້າຂອງ ແລະ ນຳພາໂດຍລິບີ.

ເດືອນມິຖຸນາ 2022, ສະພາປະທານາທິບໍດີ ໄດ້ປະກາດແຜນວິໄສທັດຍຸດທະສາດເພື່ອຄວາມປອງດອງແຫ່ງຊາດ.

ກຳມາທິການທາງດ້ານກົດໝາຍທີ່ໄດ້ຮັບການແຕ່ງຕັ້ງໂດຍສະພາປະທານາທິບໍດີ ໄດ້ເລີ່ມຮ່າງກົດໝາຍຄວາມປອງດອງແຫ່ງຊາດ ເມື່ອທ້າຍປີ 2022 ແລະ ສຳເລັດໃນເດືອນກຸມພາ 2024.

ວັນທີ20 ພະຈິກ 2024 ທ່ານ ໂມຮຳເໝັດ ເມນຟີ (Mohamed Menfi) ປະທານສະພາປະທານາທິບໍດີ ໄດ້ຮຽກຮ້ອງໃຫ້ທ່ານ ອາກີລາ ຊາເລ (Aguila Saleh) ປະທານສະພາຜູ້ແທນປະຊາຊົນ ຮັບຮອງເອົາກົດໝາຍດັ່ງກ່າວ "ໂດຍບໍ່ມີການປັບປຸງເພີ່ມຕື່ມໃດໆອີກ".

ນັບແຕ່ການຫຼົ້ມສະຫຼາຍຂອງລະບອບການປົກຄອງຂອງອະດີດຜູ້ນຳປະເທດ ທ່ານ ມູອຳມາ ກັດດາຟີ (Muammar Gaddafi) ໃນປີ2011ເປັນຕົ້ນມາ, ລິບີຕ້ອງດີ້ນຣົນກັບຄວາມແຕກແຍກ; ປັດຈຸບັນ, ປະເທດຖືກແບ່ງອອກລະຫວ່າງ 2 ຝ່າຍປົກຄອງຕົ້ນຕໍທີ່ເປັນຄູ່ແຂ່ງກັນຄື: ລັດຖະບານທີ່ຕັ້ງຢູ່ພາກຕາເວັນອອກ ເຊິ່ງສະໜັບສະໜູນໂດຍສະພາຜູ້ແທນປະຊາຊົນ ແລະ ລັດຖະບານທີ່ຕັ້ງຢູ່ພາກຕາເວັນຕົກ ໃນນະຄອນຫຼວງຕຣີໂປລີ (Tripoli) ເຊິ່ງໄດ້ຮັບການສະໜັບສະໜູນຈາກສະພາປະທານາທິບໍດີ.



# ຄະນະລັດຖະມົນຕີອາກເມນີ ອະນຸມັດຮ່າງກົດໝາຍ ເພື່ອເລີ່ມຂະບວນການເຂົ້າເປັນສະມາຊິກ EU



(Xinhua) - ເມື່ອວັນພະຫັດທີ 9 ມັງກອນຜ່ານມາ, ຄະນະລັດຖະມົນຕີອາກເມນີ ໄດ້ຮັບຮອງເອົາຮ່າງກົດໝາຍສະບັບໜຶ່ງ ເພື່ອເປີດຕົວຂະບວນການເຂົ້າເປັນສະມາຊິກສະຫະພາບເອີຣົບ ຫຼື ອີຢູ (EU).

ຮ່າງກົດໝາຍດັ່ງກ່າວ ເຊິ່ງຍື່ນຕໍ່ສະພາແຫ່ງຊາດໂດຍການລິເລີ່ມຂອງກຸ່ມໂຄສະນາເພື່ອພົນລະເມືອງ Eurovote ຫຼັງຈາກມີການຍື່ນຄຳຮ້ອງ; ນອກຈາກນັ້ນ, ຄະນະລັດຖະມົນຕີຍັງໄດ້ສະເໜີໃຫ້ປັບປຸງເພື່ອໃຫ້ສອດຄ່ອງກັບມາດຕະຖານທາງກົດໝາຍ ລວມເຖິງການຮຽບຮຽງບາງໝວດ ແລະ ມາດຕາຄືນໃໝ່ແລະກຳນົດຂອບເວລາໃຫ້ຈະແຈ້ງ.

ຂະນະດຽວກັນ, ທ່ານນາຍົກລັດຖະມົນຕີ ນິໂຄລ ປາຊິນຢານ (Nikol Pashinyan) ຮຽກຮ້ອງໃຫ້ມີຄວາມລະມັດລະວັງຕໍ່ຄວາມຄາດຫວັງຂອງສັງຄົມກ່ຽວກັບການເຂົ້າເປັນສະມາຊິກ EU ກ່ອນກຳນົດ; "ການຮັບຮອງເອົາກົດໝາຍບໍ່ໄດ້ໝາຍຄວາມວ່າອາກເມນີຈະເຂົ້າຮ່ວມ EU, ການຕັດສິນໃຈດັ່ງກ່າວສາມາດເຮັດໄດ້ຜ່ານການລົງປະຊາມະຕິເທົ່ານັ້ນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ" ທ່ານກ່າວ.

# ສິງກະໂປ ສະເໜີຮ່າງກົດໝາຍຮັກສາຄວາມສາມັກຄີທາງເຊື້ອຊາດ ແລະ ຜ່ານຮ່າງກົດໝາຍຄວບຄຸມບັນຊີທະນາຄານຂອງຜູ້ເຄາະຮ້າຍຈາກການສໍ້ໂກງ



(Xinhua) - ກະຊວງພາຍໃນຂອງສິງກະໂປ ສະເໜີຮ່າງກົດໝາຍຮັກສາຄວາມສາມັກຄີທາງເຊື້ອຊາດ ເຊິ່ງຖືກສະເໜີຄັ້ງທຳອິດໃນປີ 2021 ໂດຍທ່ານ ລີ ຊຽນລຸງ (Lee Hsien Loong) ນາຍົກລັດຖະມົນຕີໃນຂະນະນັ້ນ ເພື່ອເຂົ້າສູ່ການອ່ານຄັ້ງທຳອິດໃນກອງປະຊຸມລັດຖະສະພາເມື່ອວັນອັງຄານທີ 7 ມັງກອນຜ່ານມາ.

ກະຊວງພາຍໃນກ່າວໃນຖະແຫຼງການວ່າ ຂໍ້ສະເໜີທີ່ສຳຄັນໃນຮ່າງກົດໝາຍດັ່ງກ່າວ ລວມມີການນຳໃຊ້ລະບອບ "ຄຳສັ່ງຫ້າມ" ວິທີການທີ່ອີງໃສ່ພື້ນຖານຊຸມຊົນເພື່ອແກ້ໄຂເຫດການທາງເຊື້ອຊາດ ແລະ ມາດຕະການປ້ອງກັນເພື່ອບໍ່ໃຫ້ກຸ່ມເຊື້ອຊາດ ຖືກນຳໃຊ້ເປັນສື່ກາງຂອງອິດທິພົນຈາກຕ່າງປະເທດ.

ພາຍໃຕ້ຮ່າງກົດໝາຍ, ລັດຖະມົນຕີກະຊວງພາຍໃນ ຈະມີອຳນາດອອກຄຳສັ່ງຫ້າມຕໍ່ບຸກຄົນທີ່ກ່ຽວຂ້ອງກັບ "ການສື່ສານ, ການຜະລິດ ຫຼື ການແຈກຢາຍເນື້ອໃນ" ທີ່ທຳລາຍຄວາມສາມັກຄີທາງເຊື້ອຊາດໃນສິງກະໂປ.

ບຸກຄົນທີ່ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ຈະປະເຊີນກັບຂໍ້ຈຳກັດໃນກິດຈະກຳຕ່າງໆຂອງພວກເຂົາ ລວມທັງການເຜີຍແຜ່ຂໍ້ມູນ ຫຼື ເອກະສານທີ່ກຳນົດໄວ້, ສົນທະນາກັບກຸ່ມເປົ້າໝາຍສະເພາະໃນຫົວຂໍ້ທີ່ກຳນົດໄວ້ ແລະ ການມີສ່ວນສະໜັບສະໜູນ ຫຼື ແກ້ໄຂສິ່ງພິມທີ່ກຳນົດໄວ້.

ກະຊວງພາຍໃນກ່າວວ່າ ຄຳສັ່ງດັ່ງກ່າວຈະມີຜົນບັງຄັບໃຊ້ທັນທີຫຼັງຈາກອອກຄຳສັ່ງ, ໂດຍລະບຸວ່າ "ເນື້ອໃນທີ່ເປັນຕາລັງກຽດ ສາມາດແຜ່ລາມອອກໄປຢ່າງວ່ອງໄວ ແລະ ອາດຈະສ້າງຄວາມເສຍຫາຍຕໍ່ຄວາມສາມັກຄີໃນສັງຄົມຢ່າງກວ້າງຂວາງ ແລະ ບໍ່ສາມາດແກ້ໄຂໄດ້" ແລະ "ລັດຖະບານຕ້ອງມີວິທີການເພື່ອແກ້ໄຂບັນດາເນື້ອໃນທີ່ເປັນຕາລັງກຽດດັ່ງກ່າວ ຢ່າງວ່ອງໄວ ແລະ ລ່ວງໜ້າ."

ຮ່າງກົດໝາຍດັ່ງກ່າວຍັງແນະນຳຂໍ້ລິເລີ່ມການແກ້ໄຂໃນຊຸມຊົນອີກດ້ວຍ ເນື່ອງຈາກກະຊວງກ່າວວ່າ "ການດຳເນີນຄະດີອາຍາພຽງຢ່າງດຽວ ຈະບໍ່ສາມາດຟື້ນຟູສາຍພົວພັນໃນຊຸມຊົນໄດ້."

ຫຼັງຈາກການອ່ານຄັ້ງທຳອິດ, ຮ່າງກົດໝາຍຈະເຂົ້າສູ່ການອ່ານຄັ້ງທີສອງ ແລະ ສາມ; ເມື່ອຜ່ານການພິຈາລະນາຈາກລັດຖະສະພາແລ້ວ, ຮ່າງກົດໝາຍຕ້ອງໄດ້ຮັບການເຫັນດີຈາກປະທານາທິບໍດີ ຈຶ່ງຈະມີຜົນສັກສິດ.

ໃນສູນທອນພິດວັນຊາດປີ 2021, ທ່ານ ລີ ຊຽນລຸງ ໄດ້ປະກາດວ່າ ລັດຖະບານຈະນຳສະເໜີຮ່າງກົດໝາຍສະເພາະກ່ຽວກັບຄວາມສາມັກຄີທາງເຊື້ອຊາດ ເພື່ອຮັດແໜ້ນອຳນາດຂອງລັດຖະບານທີ່ມີຢູ່ແລ້ວ ເພື່ອແກ້ໄຂບັນຫາທາງເຊື້ອຊາດ, ເສີມຂະຫຍາຍຄວາມສາມາດຂອງສິງກະໂປໃນການຮັບມືກັບໄພຂົ່ມຂູ່ຕໍ່ຄວາມສາມັກຄີທາງເຊື້ອຊາດ ແລະ ເປັນສັນຍານໃຫ້ເຫັນເຖິງຄວາມສຳຄັນເທົ່າທຽມກັນຂອງຄວາມສາມັກຄີທາງເຊື້ອຊາດ ຄຽງຄູ່ກັບຄວາມສາມັກຄີທາງສາສະໜາໃນສັງຄົມ.

ສິງກະໂປ ເປັນບ້ານຂອງປະຊາກອນທີ່ຫຼາກຫຼາຍເຊື້ອຊາດ; ອີງຕາມການສຳຫຼວດສຳມະໂນປະຊາກອນຄັ້ງຫຼ້າສຸດທີ່ເຜີຍແຜ່ເມື່ອປີ2020, ປະຊາກອນທີ່ອາໄສຢູ່ໃນນະຄອນລັດແຫ່ງນີ້ປະກອບດ້ວຍຊາວຈີນ 74.3%, ຊາວມາເລ 13.5% ແລະ ຊາວອິນເດຍ 9%.

(ການອ່ານຮ່າງກົດໝາຍ ແມ່ນຂັ້ນຕອນຂອງການອະພິປາຍຮ່າງກົດໝາຍທີ່ຈັດຂຶ້ນໂດຍອີງການນິຕິບັນຍັດ)




ໃນວັນດຽວກັນ, ລັດຖະສະພາສິງກະໂປ ໄດ້ມີມະຕິຜ່ານຮ່າງກົດໝາຍປ້ອງກັນການສໍ້ໂກງ (Protection from Scams Bill) ທີ່ມອບອຳນາດໃຫ້ຕຳຫຼວດແລະຫ້ອງການກິດຈະການການຄ້າ ເຊິ່ງເປັນອົງການທີ່ກ່ຽວຂ້ອງໂດຍກົງກັບການສືບສວນອາຊະຍາກຳທາງທຸລະກິດ ສາມາດລະງັບການເຮັດທຸລະກຳຂອງບັນຊີທະນາຄານໃດກໍຕາມ ຖ້າພົບເຫັນຮ່ອງຮອຍ ຫຼື ຫຼັກຖານທີ່ເຊື່ອຖືໄດ້ວ່າເຈົ້າຂອງບັນຊີນັ້ນ ກຳລັງຈະໂອນເງິນເຂົ້າບັນຊີຂອງກຸ່ມແກ້ງສໍ້ໂກງ ເຖິງແມ່ນວ່າເປັນການໂອນ "ໂດຍສະໝັກໃຈ" ກໍຕາມ.

ຜູ້ທີ່ຢູ່ພາຍໃຕ້ຄຳສັ່ງຫ້າມດັ່ງກ່າວ ຈະບໍ່ສາມາດນຳໃຊ້ບັດ ATM ເຮັດທຸລະກຳລະຫວ່າງບັນຊີ ແລະ ບໍ່ສາມາດຂໍຮັບບໍລິການທີ່ກ່ຽວຂ້ອງກັບສິນເຊື່ອໄດ້, ພຽງແຕ່ສາມາດຖອນເງິນສົດເພື່ອໃຊ້ຈ່າຍໃນຊີວິດປະຈຳວັນເທົ່ານັ້ນ.

ແນວໃດກໍຕາມ, ເຈົ້າໜ້າທີ່ສາມາດນຳໃຊ້ຄຳສັ່ງລະງັບການເຮັດທຸລະກຳຂອງເຈົ້າຂອງບັນຊີໄດ້ສູງສຸດ 5 ຄັ້ງ, ແຕ່ລະຄັ້ງບໍ່ເກີນ 30 ວັນ.

ທ່ານ ນາງ ຊຸນ ເສວຫຼິງ (Sun Xueling) ລັດຖະມົນຕີກະຊວງພາຍໃນ ກ່າວວ່າ: ໜຶ່ງໃນຈຸດປະສົງຂອງການອອກກົດໝາຍນີ້ ແມ່ນເພື່ອເພີ່ມເວລາໃຫ້ແກ່ເຈົ້າໜ້າທີ່ໃນການເຕືອນຜູ້ເຄາະຮ້າຍວ່າກຳລັງຕົກເປັນເຫຍື່ອຂອງກຸ່ມແກ້ງສໍ້ໂກງ ແລະ ຕ້ອງຢຸດເຊົາການເຮັດທຸລະກຳ, ໂດຍເຈົ້າໜ້າທີ່ຈະໃຊ້ມາດຕະການລະງັບການດຳເນີນທຸລະກຳເປັນວິທີສຸດທ້າຍ ຖ້າບໍ່ສາມາດໂນ້ມນ້າວຜູ້ເຄາະຮ້າຍໄດ້.

ຂໍ້ມູນຂອງຕຳຫຼວດໃຫ້ຮູ້ວ່າ, ສິງກະໂປເສຍເງິນຢ່າງໜ້ອຍ 385.6 ລ້ານໂດລາສິງກະໂປ (282 ລ້ານໂດລາສະຫະລັດ) ຈາກຄະດີການສໍ້ໂກງ ແລະ ອາຊະຍາກຳທາງອິນເຕີເນັດ ໃນເຄິ່ງທຳອິດຂອງປີ 2024, ເພີ່ມຂຶ້ນ 24.6% ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2023.

ເຝົ້າເບິ່ງ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ວິທີການຕ່າງໆ ເພື່ອຍາດແຍ່ງນັກທ່ອງທ່ຽວ

ເນື່ອງຈາກວ່າປີ **"ທ່ອງທ່ຽວລາວ"** 2024 ຫາກໍສິ້ນສຸດລົງໃໝ່ໆໝາດໆ ຈຶ່ງຢາກໃຫ້ທ່ານຜູ້ອ່ານມີຂໍ້ມູນໃໝ່ໆຕື່ມຈາກຕ່າງປະເທດ ກ່ຽວກັບວິທີດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ໄດ້ຫຼາຍໆ ເພາະວ່າໃນຄາວໜ້າພວກເຮົາຈະມີຄວາມພຽບພ້ອມຫຼາຍກວ່າເກົ່າ. ຂ່າວຕ່າງປະເທດໃນທ້າຍເດືອນທັນວາປີຜ່ານມາໃຫ້ຮູ້ວ່າ ທາງການຈີນໄດ້ປະກາດຍົກເວັ້ນວີຊາສໍາລັບນັກທ່ອງທ່ຽວຕ່າງປະເທດ ທີ່ຕ້ອງການຜ່ານຈີນໄປທ່ຽວປະເທດທີ 3 ເພື່ອໃຫ້ນັກທ່ອງທ່ຽວເຫຼົ່ານີ້ ມີໂອກາດຢູ່ຜ່ານດົນໆກວ່າເກົ່າ; ໃນເມື່ອກ່ອນ, ຈີນກໍເຄີຍຍົກເວັ້ນວີຊາສໍາລັບຜູ້ເດີນທາງຜ່ານເປັນເວລາ72ຊົ່ວໂມງ, ໃນ 72 ຊົ່ວໂມງ (ເທົ່າກັບ 3 ວັນ) ນີ້ ນັກທ່ອງທ່ຽວມີເວລາພໍສໍາລັບທ່ອງທ່ຽວຈີນກ່ອນຈະເດີນທາງໄປທ່ຽວຕໍ່ປະເທດທີ 3. ໃນປັດຈຸບັນ, ທາງການຈີນ ໄດ້ເພີ່ມເວລາ "ປອດວີຊາສໍາລັບຜູ້ເດີນທາງຜ່ານ" ຈາກ 72 ຊົ່ວໂມງ ມາເປັນ 144 ຊົ່ວໂມງ (ເພີ່ມຂຶ້ນເທົ່າຕົວ), ຂ່າວບອກວ່າ ເຂດທີ່ຍົກເວັ້ນວີຊາສໍາລັບນັກທ່ອງທ່ຽວເດີນທາງນີ້ ໄດ້ເພີ່ມຈາກ 19 ແຂວງ ເປັນ 24 ແຂວງ. ນະໂຍບາຍຍົກເວັ້ນວີຊາ ສໍາລັບນັກທ່ອງທ່ຽວທີ່ຕ້ອງການເດີນທາງຜ່ານ ແມ່ນອີກວິທີໜຶ່ງທີ່ສາມາດກວາດເອົານັກທ່ອງທ່ຽວເຂົ້າປະເທດເພາະສໍາລັບນັກທ່ອງທ່ຽວປະເພດນີ້ແມ່ນເປັນການ"ຍິງປືນນັດດຽວໄດ້ນົກສອງໂຕ" ໄດ້ທັງຢູ່ທ່ຽວຈີນ ແລະ ການທ່ອງທ່ຽວໃນປະເທດທີ 3.

ຢູ່**ປະເທດກໍາປູເຈຍ** ກໍມີຂ່າວອອກມາໃນຕົ້ນເດືອນມັງກອນ ປີ 2025 ນີ້ວ່າ ທາງການຂອງປະເທດນີ້ ໄດ້ປະກາດນະໂຍບາຍຫຼຸດຄ່າທໍານຽມວີຊາເອເລັກໂຕຣນິກ ຫຼື E-Visa (ອ່ານອອກສຽງວ່າ ອີວີຊາ) ເຊິ່ງມີຜົນສັກສິດນັບແຕ່ວັນທີ 1 ມັງກອນປີນີ້ເປັນຕົ້ນໄປ,ເປົ້າໝາຍຂອງນະໂຍບາຍກໍຄືເພື່ອດຶງດູດເອົານັກທ່ອງທ່ຽວ ແລະ ນັກລົງທຶນຕ່າງປະເທດໃຫ້ໄດ້ຫຼາຍໆ; ອັດຕາການຫຼຸດນັ້ນມີ 2 ລະດັບຄືວີຊາປະເພດ "T" ນັ້ນ ຫຼຸດຈາກ 36 ໂດລາ/ຄົນ ມາເປັນ 30 ໂດລາ, ສ່ວນອັດຕາຫຼຸດສໍາລັບ E-Visa ທົ່ວໄປນັ້ນ ແມ່ນຈາກ 42 ໂດລາ ມາເປັນ 35 ໂດລາ/ຄົນ. ຂ່າວໃຫ້ຮູ້ຕື່ມວ່າ ມີກະແສສຽງຈາກສະມາຄົມການທ່ອງທ່ຽວອາຊີປະຈໍາກໍາປູເຈຍວ່າ ນະໂຍບາຍຫຼຸດຄ່າທໍານຽມ E-Visa ຈະຊ່ວຍອຸດສາຫະກໍາທ່ອງທ່ຽວກໍາປູເຈຍ ໄດ້ໃນລະດັບໃດລະດັບໜຶ່ງເທົ່ານັ້ນ; ດີກວ່ານັ້ນ ທາງການຄວນມີນະໂຍບາຍຈູງໃຈເປັນພິເສດສໍາລັບນັກທ່ອງທ່ຽວຈາກບາງປະເທດທີ່ເຂົ້າໄປທ່ຽວກໍາປູເຈຍຫຼາຍທີ່ສຸດ ເຊິ່ງໄດ້ແກ່ປະເທດໄທ, ຫວຽດນາມ, ຈີນ, ລາວ ແລະ ສະຫະລັດອາເມຣິກາ. ສະຖິຕິການທ່ອງທ່ຽວກໍາປູເຈຍໃຫ້ຮູ້ວ່າ ໃນປີ 2024 ມີນັກທ່ອງທ່ຽວຕ່າງປະເທດເຂົ້າໄປທ່ຽວ 6 ລ້ານຄົນ ເພີ່ມຂຶ້ນ 22% ທຽບໃສ່ປີ 2023 ເຊິ່ງມີຈໍານວນ 5.45 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 3.08 ຕື້ໂດລາ.

ໃນສະໜາມຣົບຍາດນັກທ່ອງທ່ຽວກັນນີ້, ຫຼາຍປະເທດໄດ້ອອກຫົວຄິດປະດິດສ້າງເພື່ອເປັນເຈົ້າໃນການແຂ່ງຂັນ, ຖ້າໃຜຍັງງົມຢູ່ກັບວິທີການເດີມໆ ແນ່ນອນກໍຄົງຈະໄດ້ແຕ່ກົ້ງໂກບເບິ່ງຜູ້ອື່ນຫັ້ນລະ.




ທະນາຄານພັດທະນາລາວ
LDB Bank




***# ບ່າວກະບື***

"ສະຫຼອງ!", ຄູເອົ້າສຽງແຫຼມໆອອກມາ "ເປັນຫຍັງເຈົ້າຈຶ່ງແກ້ບົດເຝິກຫັດໃຫ້ບາງບຸນຈັນອີກ?. ຂ້ອຍເບິ່ງລາຍມືເຈົ້າອອກໃດ່ເນີ"

"ບໍ່ແມ່ນດອກອ້າຍຄູ. ນ້ອງບໍ່ໄດ້ເຮັດ. ມັນເປັນພຽງວ່າ... ພວກເຮົາໃຊ້ປາກກາປາກດຽວກັນຊື່ໆດອກ."

***# BAOKBU***

"Salong!", said the teacher sharply, "You've been doing homework for miss Boonchanh again! I recognized your handwriting"

"No, teacher I haven't. It's just thar we both use the same pen!"

ຕາມພາສາ ກາຕູນ




● ໂດຍ : ພູຜາ

## ສພຂ...

(ຕໍ່ຈາກໜ້າ 6)

ຄົ້ນຄວ້າສິນທະນາໂດຍອີງໃສ່ບົດຮຽນທີ່ໄດ້ເຝິກອົບຮົມແລະບົດຮຽນທີ່ເຄີຍຈັດຕັ້ງປະຕິບັດຜ່ານມາ ເພື່ອສ້າງແນວຄວາມຄິດ, ຄວາມຮັບຮູ້, ຄວາມເຂົ້າໃຈ ຕໍ່ແຕ່ລະເນື້ອໃນ ເພື່ອສາມາດນໍາໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ, ປະສິດທິຜົນດີຂຶ້ນກວ່າເກົ່າ.

ທ່ານ ສົມສັກ ດອນຈານິດ ໄດ້ມີຄໍາເຫັນວ່າ: ຜົນສໍາເລັດຂອງກອງປະຊຸມໃນຄັ້ງນີ້ ຖືເປັນໝາກຜົນແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່ ເປັນການຍົກລະດັບຄວາມຮູ້, ຄວາມສາມາດ,ຄວາມຮັບຜິດຊອບ,ຄວາມເປັນເຈົ້າການຂອງບັນດາວິທະຍາກອນ ແລະ ສໍາມະນາກອນເຂົ້າໃນການຄົ້ນຄວ້າ, ການຈັດຕັ້ງປະຕິບັດວຽກງານຕົວຈິງແຕ່ລະເນື້ອໃນ; ທ່ານຍັງຮຽກຮ້ອງບັນດາສໍາມະນາກອນ ຈົ່ງພ້ອມກັນນໍາເອົາເນື້ອໃນຫົວຂໍ້ຕ່າງໆທີ່ໄດ້ເຝິກອົບຮົມຄັ້ງນີ້ ໄປຄົ້ນຄວ້າຄືນໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບ, ສາມາດນໍາໃຊ້ເຂົ້າໃນໜ້າທີ່ວຽກງານໃຫ້ມີຜົນສໍາເລັດເປັນຢ່າງດີ.

ກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS).

**(ເວີນທອງ ແກ້ວບຸນມີ)**

**ຜູ້ຊີ້ນໍາ**
ທ່ານ ສີງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ-ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ